ຢູ່ໃນຖະແຫຼງການດັ່ງກ່າວນີ້ ຜູ້ແທນເຂົ້າຮ່ວມກອງປະຊຸມໄດ້ຕົກລົງເຫັນດີເປັນເອກກະພາບການກ່ຽວກັບການສະເໜີການສຶກສາ ແລະ ການຮຽນຮູ້ຕະຫຼອດຊີວິດທີ່ມີຄຸນນະພາບ, ແບບທົ່ວເຖິງ ແລະ ຮຽນຮ່ວມເພື່ອທຸກຄົນ ພາຍໃນ ປີ 2030 ເປັນເປົ້າໝາຍລວມໃນທົ່ວໂລກ. ນີ້ເປັນການຢັ້ງຢືນພັນທະທີ່ໄດ້ສ້າງຂຶ້ນຢູ່ຂອບຂອງຂະບວນການສຶກສາເພື່ອທຸກຄົນເພື່ອຄວາມເຂົ້າໃຈຢ່າງຮອບດ້ານຂອງການສຶກສາ ການຈຳແນກທາງດ້ານອາຍຸ, ເພດ, ຖານະທາງສັງຄົມ ຫຼື ກຸ່ມຊົນເຜົ່າຕ້ອງຖືກລຶບລ້າງ. ອີງໃສ່ຄວາມເຂົ້າໃຈຂອງການສຶກສາຕາມສິດທິມະນຸດ, ຖະແຫຼງການ ດັ່ງກ່າວເນັ້ນໜັກໃສ່ຄວາມຕ້ອງການສຳລັບວິທີການແບບປະສົມປະສານ ເຊິ່ງສະໜອງໂອກາດທີ່ເທົ່າທຽມກັນໃຫ້ທຸກຄົນ ແລະ ຮັບປະກັນການສຶກສາທີ່ມີຄຸນນະພາບສູງ.

ຖະແຫຼງການດັ່ງກ່າວ ຍັງໄດ້ຂີດໝາຍຄວາມສຳເລັດສຳລັບຄວາມພະຍາຍາມທາງດ້ານການໂຄສະນາຂອງປະຊາຄົມການສຶກສາຜູ້ໃຫຍ່ໃນທົ່ວໂລກເພື່ອຮັບປະກັນວ່າວາລະກອງປະຊຸມໃນທົ່ວໂລກຈະບໍ່ຖືກຈຳກັດໃສ່ການສຶກສາໃນໂຮງຮຽນ ໂດຍມີພຽງແຕ່ ຂະແໜງການສຶກສາປະຖົມ, ມັດທະຍົມ, ວິຊາຊີບ ແລະ ການສຶກສາຊັ້ນສູງເທົ່ານັ້ນ. ແຕ່ວາລະດັ່ງກ່າວຍັງເປີດກວ້າງວ່າພັນທະທີ່ກວ້າງຂວາງດັ່ງກ່າວນີ້ຈະໄດ້ຮັບການຈັດຕັ້ງປະຕິບັດຄືແນວໃດ. ມີຫຼາຍສິ່ງຫຼາຍຢ່າງທີ່ຂຶ້ນກັບການປຶກສາຫາລືກັນໃນຕໍ່ໜ້າຢູ່ນິວຢອກ ກ່ຽວກັບເປົ້າໝາຍລວມຂອງການພັດທະນາແບບຍືນຍົງທີ່ຈະຖືກລົງນາມ ຮັບຮອງເອົາຢູ່ໃນສະຫະປະຊາຊາດໃນເດືອນກັນຍານີ້ ເຊິ່ງສຸດທ້າຍເປົ້າໝາຍ ດັ່ງກາວຈະປະກອບເປັນຊຸດຄາດໝາຍຊຸດໜຶ່ງ, ເປັນການຮ່າງວາລະສຳລັບ 15 ປີໃນຕໍ່ໜ້າ. ຂະບວນການທີ່ສຳຄັນອື່ນໆແມ່ນກ່ຽວຂ້ອງກັບການຜັນຂະຫຍາຍຕົວຊີ້ບອກໃນການ ປະເມີນເຊິ່ງໄດ້ວາງແຜນໄວ້ສຳລັບສອງສາມ ເດືອນທຳອິດຂອງປີໜ້ານີ້. ພຽງແຕ່ວ່າ, ຖ້າຫາກວ່າ ປະຊາຄົມການສຶກສາຜູ້ໃຫຍ່ສາມາດສະເໜີ ແລະ ການສຶກສາສຳລັບຜູ້ໃຫຍ່ ໄດ້ຮັບການອະນຸມັດຕົວຊີ້ບອກທີ່ເຂັ້ມແຂງສຳລັບຂະແໜງການຍ່ອຍ, ແລ້ວພວກເຮົາປະຊາຄົມການສຶກສາຜູ້ໃຫຍ່ຈະມີໂອກາດໃນການຖືກຮັບຮູ້, ເປັນທີ່ຍອມຮັບ. ຢ່າງໜ້ອຍທີ່ສຸດ, ນີ້ກໍ່ເປັນບົດຮຽນທີ່ຖອດຖອນໄດ້ຈາກຂະບວນການການ ສຶກສາ ເພື່ອທຸກຄົນບ່ອນທີ່ການສຶກສາສຳລັບ ຜູ້ໃຫຍ່ ແລະ ຊາວໜຸ່ມຖືກມອງຂ້າມ, ສ່ວນຫຼາຍ ແມ່ນຍ້ອນຂາດບັນດາຕົວຊີ້ບອກທາງດ້ານປະລິມານ.

ເປັນເວລາສອງວັນກ່ອນທີ່ກອງປະຊຸມການສຶກສາໂລກໄດ້ຖືກບັນຈຸເຂົ້າໃນວາລະກອງປະຊຸມຂອງອົງການຈັດຕັ້ງທີ່ບໍ່ສັງກັດລັດ ຜູ້ຕາງໜ້າຈາກອົງການຈັດຕັ້ງທາງສັງຄົມໄດ້ປະກອບຄຳຄິດຄຳເຫັນໃສ່ວາລະຂອງການສຶກສາ. ໃນນັ້ນ, ຈຸດສຳຄັນໜຶ່ງແມ່ນການຮຽກຮ້ອງໃສ່ການສຶກສາຮຽນຮ່ວມ ແລະ ເນື້ອໃນທີ່ຄົບຖ້ວນຂອງການສຶກສາ ເຊິ່ງອີງໃສ່



Education for Everyone. Worldwide.
Lifelong.



ສິດທິມະນຸດ ແລະ ເນື້ອໃນຂອງການຮຽນຮູ້ ຕະຫຼອດຊີວິດ,
ຄວາມຕ້ອງການ ທີ່ໄດ້ຮັບການປະກອບສ່ວນຈາກ
ຖະແຫຼງການອິນຊອນ. ບັນດາຜູ້ເຂົ້າຮ່ວມໄດ້ຊີ້ແຈງໃຫ້
ເຫັນວ່າຄຸນນະພາບຂອງການສຶກສາແມ່ນເປັນໄປ
ໄດ້ ໂດຍມີຄ່າຕອບແທນດີ ແລະ ຄູ ແລະ ຄູຝຶກ
ອົບຮົມທີ່ໄດ້ມາດຕະຖານຢູ່ໃນທຸກຂັ້ນ
ຕອນຂອງລະບົບເທົ່ານັ້ນ ເຊິ່ງມີຄວາມເປັນ
ໄປໄດ້ສຳລັບ ການຝຶກອົບຮົມ ແລະ
ການຍົກລະດັບແບບ ຕໍ່ເນື່ອງ. ກໍລະນີ
ສຶກສາ ແລະ ບົດສະເໜີ ຕ່າງໆ
ສະແດງໃຫ້ເຫັນວ່າມີຫຼາຍພາກພື້ນ
ຂອງໂລກ ແລະ ໂດຍສະເພາະແມ່ນຢູ່ໃນ
ການສຶກສານອກໂຮງຮຽນຍັງມີຫຼາຍໆ
ດ້ານທີ່ຕ້ອງໄດ້ປັບປຸງແກ້ໄຂ. ສິ່ງສຳຄັນ
ອື່ນໆ ແມ່ນແນວໂນ້ມທີ່ມີການຂະຫຍາຍ
ຕົວທີ່ກ້າວໄປສູ່ການສຶກສາພາກເອກກະຊົນ
ເຊິ່ງໄດ້ສິ່ງຜົນສະທ້ອນໃຫ້ທຸກຂະແໜງ
ການຍ່ອຍ ແລະ ເຮັດໃຫ້ຄວາມບໍ່ເທົ່າທຽມກັນ
ເພີ່ມຂຶ້ນໄປເລື້ອຍໆ. ລັດຖະບານຢູ່ໃນຫຼາຍໆ
ພາກຂອງໂລກນຳໃຊ້ ແນວໂນ້ມດັ່ງກ່າວນີ້ໃນການຫຼຸດ
ຜ່ອນຄ່າໃຊ້ຈ່າຍສຳລັບການສຶກສາ ແຕ່ກົງກັນຂ້າມພັດມີ
ຜົນກະທົບທາງດ້ານລົບ ໂດຍສະເພາະແມ່ນສຳລັບກຸ່ມທີ່ດ້ອຍ
ໂອກາດທາງດ້ານການສຶກສາ.

ກອງປະຊຸມແມ່ນມີຜົນສຳເລັດ ຈາກບັນດາບົດສະເໜີທີ່ໜ້າປະທັບໃຈ
ທີ່ປະເທດເກົາຫຼີເປັນເຈົ້າພາບ ເພິ່ນໄດ້ຊີ້ໃຫ້ເຫັນການລົງທຶນໃສ່ການ
ສຶກສາໃນໄລຍະ 60 ປີ ທີ່ຜ່ານມາ ເປັນໜຶ່ງໃນປັດໄຈຄວາມສຳເລັດທີ່
ສຳຄັນສຳລັບການພັດທະນາຂອງປະເທດພວກເພິ່ນ. ວິໄສທັດຂອງ
ປະເທດເກົາຫຼີໃນອານາຄົດແມ່ນເນັ້ນໜັກໃສ່ການສຶກສາ
ພົນລະເມືອງ ແລະ ແນວຄວາມຄິດສ້າງສັນໃນທົ່ວໂລກ
ເປັນຈຸດປະສົງສຳລັບລະບົບການສຶກສາ. ເມື່ອປຽບທຽບກັບ
ຄວາມເປັນຈິງແລ້ວ ເບິ່ງຄືວ່າເປັນການໂຕ້ຕອບຂອງສິ່ງທີ່ເຂົ້າໃຈເປັນ
ສິ່ງສຳຄັນສຳລັບການແຂ່ງຂັນຂອງປະເທດ, ແນວຄວາມຄິດຂອງ
"ການສຶກສາທີ່ມ່ວນຊື່ນ (ການສຶກສາທີ່ບໍ່ມີຄວາມກົດດັນ)" ເປັນວິຊາ
ໜຶ່ງອາດຄືກັນກັບການສະທ້ອນໃຫ້ເຫັນຂອງມູນຄ່າ ຕາມທິດທາງ
ເກົາຫຼີ ມີຕົວຢ່າງ ໃນແຕ່ລະມື້ ມີນັກຮຽນຂ້າຕົວຕາຍ 3 ຄົນ ຢູ່ໃນສະ
ພາວະຂອງຄວາມກົດດັນຫຼາຍເພື່ອຢາກຮຽນຈົບ.

ພວກເຮົາຂຽນລົງໃນ ຈົດໝາຍຂ່າວສະບັບນີ້ ຖະແຫຼງການອິນຊອນ
ແລະ ຖະແຫຼງການ ກອງປະຊຸມຂອງອົງການຈັດຕັ້ງທີ່ບໍ່ສັງກັດລັດ
ເປັນພາສາອັງກິດ ແລະ ພາສາລາວ.

*ອູເວ ກາກເຕີນສະແລເຈີ*
*ຜູ້ອຳນວຍການປະຈຳພາກພື້ນ*
ດີວີວີ ອິນເຕີເນເຊີນແນວ
ພາກພື້ນອາຊີໃຕ້ ແລະ ອາຊີຕາເວັນອອກສຽງໃຕ້



DVV International

Newsletter № 2/2015

Education for Everyone. Worldwide. Lifelong.

# ຖະແຫຼງການອິນຊອນ

## ການສຶກສາ 2030: ກ້າວໄປສູ່ການສຶກສາຮຽນຮ່ວມທີ່ມີຄຸນນະພາບ ແລະ ທົ່ວເຖິງ ແລະ ການຮຽນຮູ້ຕະຫຼອດຊີວິດເພື່ອທຸກຄົນ




### ຄຳນຳ

1. ພວກເຮົາ, ລັດຖະມົນຕີ, ຫົວໜ້າ ແລະ ສະມາຊິກ ຂອງ ບັນດາທ່ານຜູ້ແທນ, ຫົວໜ້າຂອງ ອົງການ ແລະ ພະນັກງານ ການນຳຂອງ ອົງການຈັດຕັ້ງ ການຮ່ວມມື ສອງຝ່າຍ ແລະ ຫຼາຍຝ່າຍ ແລະ ຜູ້ຕາງໜ້າຂອງ ອົງການຈັດຕັ້ງ ທາງສັງຄົມ, ຊ່ຽວຊານ ດ້ານການສິດສອນ, ຊາວໜຸ່ມ ແລະ ພາກເອກະຊົນ ທີ່ໄດ້ເຂົ້າຮ່ວມກອງປະຊຸມໃນເດືອນ ພຶດສະພາ 2015 ໂດຍໄດ້ຮັບກຽດຮຽນເຊີນ ຈາກຫົວໜ້າອົງການສະຫະປະຊາຊາດເພື່ອການສຶກສາ, ວິທະຍາສາດ ແລະ ວັດທະນະທຳ (UNESCO) ປະຈຳນະຄອນຫຼວງອິນຊອນ, ສາທາລະນະລັດເກົາຫຼີ ເພື່ອເຂົ້າຮ່ວມກອງປະຊຸມການສຶກສາໂລກ 2015 (WEF 2015). ພວກເຮົາຂໍຂອບໃຈມາຍັງລັດຖະບານ ແລະ ປະຊາຊົນສາທາລະນະລັດເກົາຫຼີໃນການເປັນເຈົ້າພາບໃນການຈັດກອງປະຊຸມທີ່ມີຄວາມໝາຍຄວາມສຳຄັນດັ່ງກາວນີ້ ໂດຍມີການປະກອບສ່ວນຈາກ ອົງການ ຢູນິເຊັບ (UNICEF) ທະນາຄານໂລກ (WB), ອົງການສະຫະປະຊາຊາດກອງທຶນສຳລັບປະຊາກອນ (UNFPA), ອົງການສະຫະປະຊາຊາດເພື່ອການພັດທະນາ (UNDP), ອົງການ ສະຫະປະຊາດເພື່ອ ແມ່ຍິງ (UN Women) ແລະ ສະຫະປະຊາຊາດເພື່ອຄົນ ອົບພະຍົບ (UNHCR) ໃນນາມຜູ້ເຂົ້າຮ່ວມກອງປະຊຸມດັ່ງກ່າວ. ພວກເຮົາ ຂໍສະແດງຄວາມພາກພູມໃຈ ເປັນພິເສດຕໍ່ອົງການສະຫະປະຊາຊາດເພື່ອການ ສຶກສາ, ວິທະຍາສາດ ແລະ ວັດທະນະທຳ (UNESCO) ໃນການລິເລີ່ມ ແລະ ຈັດ ກອງປະຊຸມທີ່ເປັນຂີດໝາຍສຳຄັນສຳລັບການສຶກສາ 2030.

2. ໃນກາລະໂອກາດທີ່ເປັນປະຫວັດສາດດັ່ງກ່າວນີ້ ພວກເຮົາຢືນຢັນວິໄສທັດໃນ ການຂັບເຄື່ອນການສຶກສາເພື່ອທຸກຄົນໃນທົ່ວໂລກທີ່ຈອມທຽນໃນປີ 1990 ແລະ ໄດ້ຈັດຂຶ້ນອີກທີ່ກຸງ ດາກ້າ (Dakar) ໃນປີ 2000 ກ່ຽວກັບພັນທະທີ່ສຳຄັນທີ່ສຸດຕໍ່ ການສຶກສາຢູ່ໃນທົດສະວັດ ຫວ່າງບໍ່ດົນມານີ້ ແລະ ເປັນພັນທະທີ່ຊ່ວຍໃນການ ຂັບເຄື່ອນຂະບວນການທີ່ສຳຄັນໃນການສຶກສາ. ເຊັ່ນດຽວກັນນັ້ນ, ພວກເຮົາຍັງຂໍ ຢັ້ງຢືນວ່າ ວິໄສທັດ ແລະ ຄວາມຈິງໃຈທາງດ້ານການເມືອງທີ່ສະທ້ອນໃຫ້ເຫັນຢູ່ ໃນສົນທິສັນຍາກ່ຽວກັບສິດທິມະນຸດໃນພາກພື້ນ ແລະ ສາກົນຫຼາຍໆສະບັບ. ພວກເຮົາຍອມຮັບທຸກຄວາມພະຍາຍາມ ແຕ່ພວກເຮົາກໍ່ຍັງມີຄວາມເປັນຫ່ວງວ່າ ພວກເຮົາຍັງໄກທີ່ຈະກ້າວໄປເຖິງການສຶກສາເພື່ອທຸກຄົນ.

3. ພວກເຮົາຍັງຈິດຈຳສັນຍາມັດສ໌ແຄັດ (Muscat) ທີ່ສ້າງຂຶ້ນໂດຍຜ່ານປຶກສາ ຄົ້ນຄວ້າຢ່າງກວ້າງຂວາງ ແລະ ຖືກຮັບຮອງເອົາຢູ່ກອງປະຊຸມການສຶກສາເພື່ອທຸກ ຄົນໃນລະດັບສາກົນໃນປີ 2014 ແລະ ສັນຍາດັ່ງກ່າວໄດ້ແຈ້ງເປົ້າໝາຍການ ສຶກສາທີ່ໄດ້ສະເໜີຈາກໜ່ວຍງານທີ່ເຮັດວຽກຢ່າງເປີດກວ້າງກ່ຽວກັບເປົ້າໝາຍ ການພັດທະນາແບບຍືນຍົງ. ພວກເຮົາຍັງຈິດຈຳໄດ້ອີກວ່າ ຜົນໄດ້ຮັບຂອງກອງປະຊຸມ ລັດຖະມົນຕີປະຈຳພາກພື້ນ ກ່ຽວກັບການສຶກສາພາຍຫຼັງປີ 2015 ແລະ ໄດ້ບັນທຶກຜົນຂອງ ບົດລາຍງານການຕິດຕາມການສຶກສາເພື່ອທຸກຄົນໃນທົ່ວໂລກ ໃນປີ 2015 ແລະ ບົດລາຍງານການວິເຄາະການສຶກສາເພື່ອທຸ ກຄົນປະຈຳ ພາກພື້ນ. ພວກເຮົາຍັງຈິດຈຳການປະກອບສ່ວນທີ່ ສຳຄັນຂອງກອງທຶນເລັ່ງລັດດ້ານການສຶກສາໃນທົ່ວໂລກ ກໍ່ຄື ບົດບາດຂອງ ລັດຖະບານ ແລະ ອົງການຈັດຕັ້ງໃນພາກພື້ນ, ອົງການຈັດຕັ້ງທີ່ຂຶ້ນກັບລັດຖະບານໃນລະດັບສາກົນ ແລະ ອົງການຈັດຕັ້ງທີ່ບໍ່ ສັງກັດລັດຢູ່ໃນພັນທະທາງດ້ານການເມືອງ ສຳລັບການສຶກສາ.

4. ນັບແຕ່ປີ 2000 ເປັນຕົ້ນມາ, ແມ່ນມີຄວາມຄືບໜ້າຫຼາຍໆດ້ານ ທີ່ກ້າວໄປສູ່ເປົ້າໝາຍການສຶກສາເພື່ອທຸກຄົນ ແລະ ເປົ້າໝາຍ ສະຫັດສະວັດດ້ານການພັດທະນາທາງດ້ານການສຶກສາ (MDGs) ກໍ່ຄືບົດຮຽນທີ່ຖອດຖອນໄດ້ ແລະ ກຳລັງກວດສອບ ເບິ່ງສິ່ງທ້າທາຍຕ່າງໆທີ່ຍັງເຫຼືອ ແລະ ມີຄວາມຕັ້ງໃຈໃສ່ວາລະ ຂອງການສຶກສາປີ 2030 ທີ່ໄດ້ນຳສະເໜີໄວ້ ແລະ ຂອບວຽກ ງານສຳລັບການເຄື່ອນໄຫວກໍ່ຄືບັນດາບຸລິມະສິດ ແລະ ຍຸດທະສາດເພື່ອໃຫ້ປະສົບຜົນສຳເລັດ, ພວກເຮົາຮັບຮອງເອົາ ຖະແຫຼງການດັ່ງກ່າວນີ້.

### ຮອດປີ 2030: ວິໄສທັດໃໝ່ສຳລັບການສຶກສາ

5. ວິໄສທັດຂອງພວກເຮົາແມ່ນເພື່ອຫັນປ່ຽນຊີວິດໂດຍຜ່ານການ ສຶກສາ, ການຮັບຮູ້ເຖິງບົດບາດສຳຄັນຂອງການສຶກສາທີ່ເປັນ ປັດໄຈຕົ້ນຕໍຂອງການພັດທະນາ ແລະ ໃນການບັນລຸເປົ້າໝາຍ ການພັດທະນາທີ່ມີຄວາມຍືນຍົງອື່ນໆ. ພວກເຮົາເຂົ້າໃຈຕໍ່ ຄວາມຮີບດ່ວນຕໍ່ວຽກງານການສຶກສາເປັນວາລະອັນໜຶ່ງ ອັນດຽວກັນ, ວາລະທີ່ຕໍ່ໃໝ່ທີ່ຄົບຊຸດ, ທີ່ມີຄວາມຕັ້ງໃຈ ແລະ ມີຄວາມ ປາດຖະໜາ, ທີ່ຈະບໍ່ປະຖິ້ມບຸກຄົນໃດບຸກຄົນໜຶ່ງ. ວິໄສທັດໃໝ່ດັ່ງກ່າວນີ້ແມ່ນເປັນເປົ້າໝາຍການພັດທະນາແບບ ຍືນຍົງ ເປົ້າໝາຍ 4 *“ຮັບປະກັນການຮຽນຮ່ວມທີ່ມີຄຸນນະພາບ ແລະ ທົ່ວເຖິງ ແລະ ສົ່ງເສີມໂອກາດການຮຽນຮູ້ຕະຫຼອດຊີວິດ ເພື່ອທຸກຄົນ”* ແລະ ເປົ້າໝາຍຕ່າງໆທີ່ສອດຄ່ອງກັນ. ແມ່ນການ ຫັນປ່ຽນ ແລະ ທົ່ວເຖິງ, ເອົາໃຈໃສ່ຕໍ່ ‘ທຸລະກິດທີ່ບໍ່ມີວັນ ສິ້ນສຸດ‘ ຂອງວາລະການສຶກສາເພື່ອທຸກຄົນ ແລະ ເປົ້າໝາຍ ສະຫັດສະວັດດ້ານການພັດທະນາທາງດ້ານການສຶກສາ ແລະ ແກ້ໄຂບັນຫາສິ່ງທ້າທາຍຕ່າງໆທາງດ້ານການສຶກສາໃນລະດັບ ຊາດ ແລະ ສາກົນ. ເປັນແຮງບັນດານໃຈຈາກວິໄສທັດຂອງ ການສຶກສາທີ່ເຫັນອົກເຫັນໃຈມະນຸດສະທຳ ແລະ ການ ພັດທະນາ ໂດຍອີງໃສ່ສິດທິ ແລະ ກຽດສັກສີຂອງມະນຸດ; ຄວາມຍຸຕິທຳທາງສັງຄົມ, ການຮຽນຮວມ, ການປົກປ້ອງ, ວັດທະນະທຳ, ຄວາມຫຼາກຫຼາຍຂອງຊົນເຜົ່າ ແລະ ພາສາ ແລະ ຄວາມຮັບຜິດຊອບຮ່ວມກັນ. ພວກເຮົາຢືນຢັນວ່າການ ສຶກສາແມ່ນຜົນປະໂຫຍດຂອງລັດ, ສິດທິມະນຸດທີ່ເປັນພື້ນຖານ ແລະ ເປັນພື້ນຖານໃນການຮັບປະກັນຄວາມເຂົ້າໃຈສິດທິຂອງ

ຄົນອື່ນ. ສຳຄັນແມ່ນເພື່ອສັນຕິພາບ, ຄວາມອົດທົນ, ຄວາມສົມຫວັງຂອງມະນຸດ ແລະ ການພັດທະນາແບບຍືນຍົງ. ພວກເຮົາຮັບຮູ້ວ່າການສຶກສາເປັນສິ່ງສຳຄັນເພື່ອບັນລຸການມີວຽກເຮັດງານທຳຢ່າງເຕັມສ່ວນ ແລະ ຫຼຸດຜ່ອນຄວາມທຸກຍາກ. ພວກເຮົາຈະເນັ້ນໜັກໃສ່ຄວາມພະຍາຍາມໃນການເຂົ້າເຖິງ, ຄວາມເທົ່າທຽມກັນ ແລະ ການຮຽນຮ່ວມ, ຄຸນນະພາບ ແລະ ຜົນການຮຽນຂອງນັກຮຽນພາຍໃນຮູບແບບການຮຽນຮູ້ຕະຫຼອດຊີວິດ.

6. ກຳລັງໃຈຈາກຜົນສຳເລັດທີ່ມີຄວາມໝາຍຄວາມສຳຄັນໃນການຂະຫຍາຍ *ໂອກາດການເຂົ້າຮຽນ* ການສຶກສາໃນໄລຍະ 15 ປີ ທີ່ຜ່ານມາ, ພວກເຮົາຈະຮັບປະກັນວ່າການຮຽນໃນ 12 ປີ ແມ່ນບໍ່ເສຍຄ່າຮຽນ, ລັດເປັນຜູ້ໃຫ້ທຶນ, ການສຶກສາປະຖົມ ແລະ ມັດທະຍົມທີ່ມີຄຸນນະພາບຢ່າງທົ່ວເຖິງ, ໃນນັ້ນ ການສຶກສາພາກບັງຂັບຢ່າງໜ້ອຍສຸດແມ່ນ 9 ປີ, ການນຳໄປສູ່ຜົນການຮຽນຂອງນັກຮຽນທີ່ມີຄວາມສອດຄ່ອງ. ພວກເຮົາຍັງສົ່ງເສີມການສະໜອງ ການສຶກສາ ໜຶ່ງປີໂດຍບໍ່ເສຍຄ່າ ແລະ ຫ້ອງກຽມປະຖົມບັງຄັບທີ່ມີຄຸນນະພາບ ແລະ ການສະໜອງການຮຽນທີ່ເດັກທຸກຄົນສາມາດເຂົ້າເຖິງການພັດທະນາ, ການດູແລ ແລະ ການສຶກສາເດັກກ່ອນໄວຮຽນທີ່ມີຄຸນນະພາບ. ພວກເຮົາຍັງມີພັນທະຕໍ່ການສະໜອງການສຶກສາທີ່ມີຄວາມໝາຍ ແລະ ໂອກາດ ຕ່າງໆ ໃນການຝຶກອົບຮົມໃຫ້ແກ່ບັນດາເດັກ ແລະ ໄວໜຸ່ມທີ່ບໍ່ໄດ້ເຂົ້າໂຮງຮຽນ, ຜູ້ທີ່ຕ້ອງການການຮຽນຢ່າງຮີບດ່ວນ, ຢ່າງມີເປົ້າໝາຍ ແລະ ຍືນຍົງ ເພື່ອຮັບປະກັນວ່າເດັກທຸກຄົນຢູ່ໃນໂຮງຮຽນ ແລະ ຮຽນໜັງສື.



7. *ການຮຽນຮ່ວມ ແລະ ຄວາມເທົ່າທຽມກັນ* ໃນການ ສຶກສາ ແລະ ໂດຍຜ່ານການສຶກສາ ແມ່ນພື້ນຖານຂອງວາລະການສຶກສາທາງດ້ານການຫັນປ່ຽນ ແລະ ສະນັ້ນ ພວກເຮົາມີພັນທະໃນການແກ້ໄຂທຸກຮູບແບບຂອງການຍົກເວັ້ນ ບໍ່ໃຫ້ເຂົ້າຮ່ວມ ແລະ ຈຳແນກເປັນກຸ່ມດ້ອຍໂອກາດ, ຄວາມແບ່ງແຍກ ແລະ ຄວາມບໍ່ເທົ່າທຽມກັນໃນການເຂົ້າເຖິງການສຶກສາ, ການມີສ່ວນຮ່ວມ ແລະ ຜົນການຮຽນຂອງ ນັກຮຽນ. ບໍ່ມີເປົ້າໝາຍການສຶກສາໃດທີ່ຄິດວ່າບັນລຸໄດ້ ຈົນກວ່າເປົ້າໝາຍດັ່ງກ່າວຈະບັນລຸໄດ້ໂດຍໝົດທຸກຄົນ. ສະນັ້ນ, ພວກເຮົາມີພັນທະໃນການສ້າງການປ່ຽນແປງທີ່ຈຳເປັນໃນນະໂຍບາຍການສຶກສາ ແລະ ເນັ້ນໜັກຄວາມພະຍາຍາມຂອງພວກເຮົາໃສ່ເດັກຜູ້ດ້ອຍໂອກາດທີ່ສຸດ ໂດຍສະເພາະແມ່ນເດັກພິການ ເພື່ອຮັບປະກັນວ່າບໍ່ມີເດັກຄົນໃດຄົນໜຶ່ງຖືກປະຖິ້ມ.

8. ພວກເຮົາຮັບຮູ້ເຖິງຄວາມສຳຄັນຂອງ*ຄວາມສະເໝີພາບລະຫວ່າງຍິງ-ຊາຍ* ໃນການບັນລຸສິດທິຕໍ່ການສຶກສາເພື່ອທຸກຄົນ. ສະນັ້ນ, ເຮົາຈຶ່ງມີພັນທະໃນການສະໜັບສະໜູນ ນະໂຍບາຍຕ່າງໆ, ການວາງແຜນ ແລະ ສິ່ງແວດລ້ອມທາງດ້ານ ການຮຽນທີ່ມີຄວາມລະອຽດອ່ອນທາງດ້ານບົດບາດຍິງ-ຊາຍ, ການເຊື່ອມສານບັນຫາລະຫວ່າງຍິງ-ຊາຍໃນການສ້າງຄູ ແລະ ຫຼັກສູດ ແລະ ລຶບລ້າງການແບ່ງແຍກລະຫວ່າງຍິງ-ຊາຍ ແລະ ຄວາມຮຸນແຮງ ໃນໂຮງຮຽນ.

9. ພວກເຮົາມີພັນທະຕໍ່ການສຶກສາທີ່ມີ*ຄຸນນະພາບ* ແລະ ການປັບປຸງຜົນການຮຽນຂອງນັກຮຽນ ທີ່ຕ້ອງການສ້າງຄວາມເຂັ້ມແຂງການຊ່ວຍເຫຼືອ, ຂະບວນການຕ່າງໆ ແລະ ການປະເມີນຜົນການຮຽນຂອງນັກຮຽນ ແລະ ກົນໄກຕ່າງໆ ເພື່ອປະເມີນຄວາມຄືບໜ້າ. ພວກເຮົາຈະຮັບປະກັນວ່າບັນດາຄູສອນ ແລະ ຜູ້ບໍລິຫານການສຶກສາຈະໄດ້ຮັບການມອບອຳນາດ, ຈະໄດ້ຮັບການບັນຈຸຢ່າງພຽງພໍ, ໄດ້ຮັບການຝຶກອົບຮົມເປັນຢ່າງດີ, ມີວຸດທິການສຶກສາມືອາຊີບ, ໄດ້ຮັບ ການຊຸກຍູ້ ແລະ ສົ່ງເສີມໃນແຫຼ່ງທຶນທີ່ດີ, ມີລະບົບຄຸ້ມຄອງທີ່ມີປະສິດທິພາບ ແລະ ປະສິດທິຜົນ. ການສຶກສາທີ່ມີຄຸນນະພາບສ້າງຄວາມຄິດທີ່ສ້າງສັນ ແລະ ຄວາມຮູ້ ແລະ ເພື່ອຮັບປະກັນການຮຽນຮູ້ທັກສະທີ່ເປັນພື້ນຖານຂອງການຮຽນຮູ້ໜັງສື ແລະ ການຄຳນວນເລກ ກໍ່ຄືທັກສະ ໃນການວິເຄາະ, ທັກສະໃນການແກ້ໄຂບັນຫາ ແລະ ທັກສະ ຄວາມສາມາດທາງດ້ານມັນສະໝອງໃນລະດັບສູງ, ທັກສະສ່ວນບຸກຄົນ ແລະ ທັກສະທາງສັງຄົມ. ການສຶກສາທີ່ມີຄຸນນະພາບຍັງໄດ້ສ້າງທັກສະຕ່າງໆ, ຄວາມສຳຄັນ ແລະ ທັດສະນະຄະຕິທີ່ເຮັດໃຫ້ ພົນລະເມືອງກ້າວໄປສູ່ການມີສຸຂະພາບເຂັ້ມແຂງ ແລະຊີວິດທີ່ສົມຫວັງ, ການຕັດສິນໃຈ ແລະ ການໂຕ້ຕອບຕໍ່ສິ່ງທ້າທາຍຕ່າງໆໃນທ້ອງຖິ່ນ ແລະ ສາກົນ ໂດຍຜ່ານການສຶກສາເພື່ອການ ພັດທະນາແບບຍືນຍົງ ແລະ ການສຶກສາ ພົນລະເມືອງຂອງສາກົນ (GCED). ຕໍ່ກັບບັນຫານີ້, ພວກເຮົາສະໜັບສະໜູນການຈັດຕັ້ງປະຕິບັດແຜນງານການເຄື່ອນໄຫວຂອງສາກົນຢ່າງເຕັມສ່ວນກ່ຽວກັບການຈັດຕັ້ງປະຕິບັດການສຶກສາເພື່ອການພັດທະນາແບບຍືນຍົງທີ່ກອງປະຊຸມລະດັບໂລກຂອງອົງການສະຫະປະຊາຊາດເພື່ອການສຶກສາ, ວິທະຍາສາດ ແລະ ວັດທະນະທຳ (UNESCO) ທີ່ເອຈິ-ນາໂກຍາ ໃນປີ 2014. ພວກເຮົາຍັງເນັ້ນໜັກໃສ່ຄວາມສຳຄັນຂອງສິດທິມະນຸດທາງດ້ານການສຶກສາ ແລະ ການຝຶກອົບຮົມເພື່ອບັນລຸວາລະການພັດທະນາແບບຍືນຍົງພາຍຫຼັງປີ 2015.

10. ພວກເຮົາມີພັນທະໃນການສົ່ງເສີມ *ໂອກາດຕ່າງໆໃນການຮຽນຮູ້ຕະຫຼອດຊີວິດ* ທີ່ມີຄຸນນະພາບເພື່ອທຸກຄົນ ໃນການຈັດການຮຽນ, ການສອນທັງໝົດ ແລະ ທຸກລະດັບຂອງການສຶກສາ. ໂອກາດດັ່ງກ່າວນີ້ລວມມີການເຂົ້າເຖິງການສຶກສາເຕັກນິກ ແລະ ວິຊາຊີບ ແລະ ຝຶກອົບຮົມທີ່ມີຄຸນນະພາບ, ການສຶກສາຊັ້ນສູງ ແລະ ການຄົ້ນຄວ້າຢ່າງທົ່ວເຖິງ ແລະ ເພີ່ມຂຶ້ນເລື້ອຍໆ ໂດຍອີງໃສ່ຄວາມສົນໃຈຕໍ່ການຮັບປະກັນຄຸນນະພາບ. ນອກນັ້ນ, ການສະໜອງທິດທາງໃນການຮຽນທີ່ສາມາດປັບປ່ຽນໄດ້, ຄວາມຮັບຮູ້, ການກວດສອບ ແລະ ການຮັບຮອງຄວາມຮູ້, ທັກສະຕ່າງໆ ແລະ ຄວາມສາມາດຕ່າງໆ ທີ່ຕ້ອງການ ໂດຍຜ່ານ ການສຶກສານອກໂຮງຮຽນ ແລະ ການສຶກສາຕາມອັດທະຍາໄສແມ່ນມີຄວາມ ສຳຄັນເຊັ່ນດຽວກັນ. ໃນຕໍ່ໜ້າພວກເຮົາຍັງມີພັນທະໃນການຮັບປະກັນວ່າ ຊາວໜຸ່ມ ແລະ ຜູ້ໃຫຍ່ທຸກຄົນ ໂດຍສະເພາະແມ່ນເດັກຍິງ ແລະ ແມ່ຍິງ ໃຫ້ບັນລຸລະດັບຄວາມສາມາດທີ່ຮັບຮູ້ ແລະ ສອດຄ່ອງໃນການຄຳນວນເລກ ແລະ ການຮຽນຮູ້ໜັງສືພໍເພິ່ງພາຕົນເອງໄດ້ ແລະ

DVV International

Newsletter № 2/2015

Education for Everyone. Worldwide.
Lifelong.

ບັນລຸຕາມຄວາມຕ້ອງການ ທັກສະຊີວິດ ແລະ ສິ່ງທີ່ພວກເຂົາໄດ້ຮັບຈາກການຮຽນຮູ້, ການສຶກສາ ສໍາລັບຜູ້ໃຫຍ່ ແລະ ໂອກາດຕ່າງໆໃນການຝຶກອົບຮົມ. ພວກເຮົາຍັງມີພັນທະ ໃນການສ້າງຄວາມເຂັ້ມແຂງທາງດ້ານວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກໍາຕ່າງໆ. ເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ການສື່ສານ (ICTs) ຕ້ອງໄດ້ຄຸ້ມຄອງເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບການສຶກສາ, ການເຜີຍແຜ່ຄວາມຮູ້, ການເຂົ້າເຖິງຂໍ້ມູນ, ຄຸນນະພາບ ແລະ ການຮຽນຮູ້ ທີ່ມີປະສິດທິຜົນ ແລະ ການສະໜອງການບໍລິການທີ່ມີປະສິດທິຜົນຫຼາຍຂຶ້ນ.

11. ຍິ່ງໄປກວ່ານັ້ນ, ພວກເຮົາສັງເກດດ້ວຍຄວາມເປັນຫ່ວງເປັນໄຍຢ່າງແທ້ຈິງວ່າ ປັດຈຸບັນນີ້ ອັດຕາສ່ວນຢ່າງຫຼວງຫຼາຍຂອງພົນລະເມືອງທີ່ບໍ່ໄດ້ເຂົ້າໂຮງຮຽນຂອງໂລກແມ່ນອາໄສຢູ່ຕາມເຂດພື້ນທີ່ມີຜົນກະທົບທາງດ້ານການຂັດແຍ່ງກັນ, ແລະ ເຂດພື້ນທີ່ທີ່ມີການວິກິດການ, ມີຄວາມຮຸນແຮງ ແລະ ພື້ນທີ່ທີ່ມີການໂຈມຕີສະຖາບັນການສຶກສາ, ມີຜົນກະທົບທາງດ້ານໄພພິບັດທາງທໍາມະຊາດ ແລະ ໂລກລະບາດສືບຕໍ່ທໍາລາຍການສຶກສາ ແລະ ການພັດທະນາໃນທົ່ວໂລກ. ພວກເຮົາມີພັນທະໃນການພັດທະນາລະບົບການສຶກສາທີ່ມີຟື້ນຄືນສະພາບ, ມີການຕອບສະໜອງໄດ້ ແລະ ມີການຮຽນຮ່ວມໃຫ້ຫຼາຍຂຶ້ນ ເພື່ອບັນລຸກັບຄວາມຕ້ອງການຂອງເດັກ, ຊາວໜຸ່ມ, ຜູ້ໃຫຍ່ໃນສະພາວະຄວາມເປັນຈິງດັ່ງກ່າວນີ້ ລວມທັງຜູ້ທີ່ຍົກຍ້າຍພາຍໃນ ແລະ ຊາວອົບພະຍົບ. ພວກເຮົາເນັ້ນໜັກໃສ່ຄວາມຕ້ອງການສໍາລັບການສຶກສາທີ່ສະໜອງໃຫ້ນັ້ນ ຢູ່ໃນຄວາມປອດໄພ, ໃນສິ່ງແວດລ້ອມການຮຽນຮູ້ທີ່ມີການສະໜັບສະໜູນ ແລະ ຮັບປະກັນ ໂດຍບໍ່ມີຄວາມຮຸນແຮງ. ພວກເຮົາຂໍແນະນໍາໃຫ້ມີການຕອບສະໜອງຕໍ່ວິກິດການຢ່າງພຽງພໍ, ຈາກການຕອບສະໜອງແບບສຸກເສີນໂດຍຜ່ານການຟື້ນຟູ ແລະ ການກໍ່ສ້າງຄືນໃໝ່; ການປະສານໃນລະດັບຊາດໃຫ້ດີຂຶ້ນກວ່າເກົ່າ, ການຕອບສະໜອງໃນລະດັບພາກພື້ນ ແລະ ສາກົນ ແລະ ການພັດທະນາຂີດຄວາມສາມາດ ເພື່ອຫຼຸດຜ່ອນຄວາມສ່ຽງແບບຄົບຊຸດ ແລະ ການຫຼຸດຜ່ອນເພື່ອຮັບປະກັນວ່າການສຶກສາຖືກປົກປັກຮັກສາໃນລະຫວ່າງສະຖານະການທີ່ມີການຂັດແຍ່ງກັນ, ສະຖານະການສຸກເສີນ ແລະ ການຟື້ນຟູໃນເບື້ອງຕົ້ນ ແລະ ຫຼັງການຂັດແຍ່ງກັນ.

## ການຈັດຕັ້ງປະຕິບັດວາລະທົ່ວໄປຂອງພວກເຮົາ

12. ພວກເຮົາຢືນຢັນວ່າຄວາມຮັບຜິດຊອບທີ່ເປັນພື້ນຖານສໍາລັບການ ຈັດຕັ້ງປະຕິບັດວາລະດັ່ງກ່າວນີ້ໃຫ້ມີຜົນສໍາເລັດໂດຍດີນັ້ນ ແມ່ນຂຶ້ນກັບລັດຖະບານ. ພວກເຮົາໄດ້ຖືກກໍານົດເພື່ອສ້າງຂອບນະໂຍບາຍ ແລະ ກົດໝາຍທີ່ສົ່ງເສີມຄວາມຮັບຜິດຊອບ ແລະ ຄວາມໂປ່ງໃສເຊັ່ນດຽວກັນກັບການຄຸ້ມຄອງທີ່ມີສ່ວນຮ່ວມ ແລະ ການຮ່ວມມືທີ່ມີການປະສານງານກັນໃນທຸກລະດັບ ແລະ ທົ່ວຂະແໜງການ ແລະ ໃນການສົ່ງເສີມສິດທິໃນການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງຕ່າງໆ.

13. ພວກເຮົາຮຽກຮ້ອງໃຫ້ມີການປະສານສົບທົບ, ການຮ່ວມມື, ການປະສານງານຢ່າງເຂັ້ມແຂງໃນລະດັບພາກພື້ນ ແລະ ສາກົນ ແລະ ການຕິດຕາມການຈັດຕັ້ງປະຕິບັດວາລະການສຶກສາອີງຕາມການເກັບກໍາຂໍ້ມູນ, ການວິເຄາະຂໍ້ມູນ ແລະ ການລາຍງານໃນລະດັບປະເທດ, ໃນຂອບຂອງໜ່ວຍງານ, ກົນໄກ ແລະ ຍຸດທະສາດໃນລະດັບພາກພື້ນ.

14. ພວກເຮົາຮັບຮູ້ວ່າຜົນສໍາເລັດຂອງວາລະການສຶກສາ 2030 ຕ້ອງການນະໂຍບາຍ ແລະ ການວາງແຜນທີ່ດີ ເຊັ່ນດຽວກັນກັບການກະກຽມການຈັດຕັ້ງປະຕິບັດທີ່ມີປະສິດທິພາບ. ເປັນທີ່ຈະແຈ້ງແລ້ວວ່າຄວາມປາດຖະໜາທີ່ຮອບຮອມເຂົ້າໃນເປົ້າໝາຍທີ 4 ຂອງເປົ້າໝາຍການພັດທະນາແບບຍືນຍົງນັ້ນບໍ່ຖືກຮັບຮູ້ຖ້າບໍ່ມີການເພີ່ມງົບປະມານຢ່າງມີເປົ້າໝາຍທີ່ດີ ແລະ ມີຄວາມໝາຍ ຄວາມສໍາຄັນ ໂດຍສະເພາະແມ່ນຢູ່ໃນບັນດາປະເທດທີ່ຍັງຢູ່ໄກໃນການບັນລຸເປົ້າໝາຍການສຶກສາທີ່ມີຄຸນນະພາບເພື່ອທຸກຄົນໃນທຸກລະດັບ. ສະນັ້ນ, ພວກເຮົາມີພັນທະໃນການເພີ່ມການຈ່າຍຂອງລັດເຂົ້າໃນການສຶກສາໂດຍອີງໃສ່ສະພາບຄວາມເປັນຈິງຂອງປະເທດ ແລະ ຊຸກຍູ້ໃຫ້ ປະຕິບັດຕາມມາດຕະຖານຂອງພາກພື້ນ ແລະ ສາກົນໃນການຈັດສັນງົບປະມານໃຫ້ມີປະສິດທິພາບຢ່າງໜ້ອຍສຸດ 4 - 6% ຂອງຍອດຜະລິດຕະພັນພາຍໃນ ແລະ/ຫຼືຢ່າງ ໜ້ອຍສຸດ 15 - 20% ຂອງລາຍຈ່າຍທັງໝົດຂອງລັດເຂົ້າໃນການສຶກສາ.

15. ສັງເກດເຫັນວ່າຄວາມສໍາຄັນຂອງການຮ່ວມມືໃນການພັດທະນາໃນການລົງທຶນທັງໝົດຂອງລັດຖະບານ, ພວກເຮົາຮຽກຮ້ອງໃຫ້ບັນດາປະເທດທີ່ພັດທະນາແລ້ວ, ຜູ້ໃຫ້ທຶນຕາມປະເພນີ ຫຼື ຮ່ວມເຂົ້າກັນ, ປະເທດທີ່ມີລາຍຮັບລະດັບປານກາງ ແລະ ກົນໄກຕ່າງໆໃນການໃຫ້ທຶນຂອງສາກົນ ເພື່ອເພີ່ມທຶນສະໜັບສະໜູນການສຶກສາ ແລະ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດວາລະຂອງການສຶກສາອີງຕາມຄວາມຕ້ອງການ ແລະ ບຸລິມະສິດຂອງປະເທດ. ພວກເຮົາ ຮັບຮູ້ວ່າຄວາມເພິ່ງພໍໃຈຂອງພັນທະທັງໝົດທີ່ພົວພັນເຖິງ ການຊ່ວຍທາງການເພື່ອການພັດທະນາ (ODA) ແມ່ນມີ ຄວາມສໍາຄັນຫຼາຍລວມທັງພັນທະຕ່າງໆ ຈາກປະເທດທີ່ພັດທະນາແລ້ວຫຼາຍປະເທດເພື່ອບັນລຸເປົ້າໝາຍ 0.7% ຂອງຍອດຜະລິດຕະພັນຂອງຊາດສໍາລັບ ການຊ່ວຍເຫຼືອທາງການເພື່ອການພັດທະນາ ເພື່ອພັດທະນາປະເທດຕ່າງໆ. ອີງຕາມພັນທະຂອງປະເທດດັ່ງກ່າວ, ພວກເຮົາ ຊຸກຍູ້ໃຫ້ບັນດາປະເທດທີ່ພັດທະນາແລ້ວທີ່ຍັງບໍ່ທັນໄດ້ ປະຕິບັດພັນທະ ໃຫ້ເພີ່ມຄວາມພະຍາຍາມຢ່າງແທ້ຈິງເພື່ອກ້າວໄປສູ່ເປົ້າໝາຍ 0.7% ຂອງຍອດຜະລິດຕະພັນຂອງຊາດສໍາລັບການຊ່ວຍເຫຼືອທາງການ ເພື່ອການພັດທະນາເພື່ອພັດທະນາປະເທດຕ່າງໆ.ພວກເຮົາຍັງມີ ພັນທະໃນການ ເພີ່ມການສະໜັບສະໜູນ ຂອງພວກ

ເປົ້າໝາຍ 4 ການພັດທະນາ
ແບບຍືນຍົງສະເໜີການສົ່ງເສີມ
“ການຮຽນຮູ້ຕະຫຼອດຊີວິດ
ສໍາລັບທຸກຄົນ“



ເຮົາໃຫ້ບັນດາປະເທດດ້ອຍພັດທະນາ. ໃນຕໍ່ໜ້າ, ພວກເຮົາຍັງຮັບຮູ້ຄວາມສໍາຄັນຂອງການເປີດທຸກແຫຼ່ງທຶນທີ່ມີຄວາມເປັນໄປໄດ້ ເພື່ອສະໜັບສະໜູນສິດທິຕໍ່ການສຶກສາ. ພວກເຮົາຂໍ ແນະນໍາໃຫ້ມີການປັບປຸງປະສິດທິພາບຂອງການຊ່ວຍເຫຼືອ ໂດຍຜ່ານ ການປະສານງານ ແລະ ຄວາມກົມກຽວ ແລະ ການວາງແຜນງົບ ປະມານ ທີ່ເປັນ ບຸລິມະສິດ ແລະ ການຊ່ວຍເຫຼືອໃຫ້ແກ່ບັນດາຂະແໜງການ ຍ່ອຍທີ່ບໍ່ ໄດ້ຮັບການຊ່ວຍເຫຼືອເທົ່າທີ່ຄວນ ແລະ ບັນດາປະເທດທີ່ມີລາຍຮັບຕໍ່າ. ພວກເຮົາຍັງຂໍ ແນະນໍາໃຫ້ມີການເພີ່ມການສະໜັບສະໜູນການສຶກສາຢ່າງມີຄວາມໝາຍຢູ່ໃນວິກິດການທີ່ແກ່ຍາວ ແລະ ວິກິດການທາງມະນຸດສະທໍາ. ພວກເຮົາຂໍຕ້ອນຮັບກອງປະຊຸມສຸດຍອດ ໂອສະໂລ (Oslo) ກ່ຽວກັບການສຶກສາເພື່ອການພັດທະນາ (ກໍລະກົດ 2015) ແລະ ຮຽກຮ້ອງກ່ຽວກັບການວາງແຜນທາງດ້ານການເງິນສໍາລັບກອງປະຊຸມການພັດທະນາຢູ່ ແອັດດິສ ອາບາບ້າ (Addis Ababa) ເພື່ອສະໜັບສະໜູນເປົ້າໝາຍທີ 4 ຂອງເປົ້າໝາຍການພັດທະນາແບບຍືນຍົງ.

16. ພວກເຮົາຮຽກຮ້ອງໃຫ້ຜູ້ເຂົ້າຮ່ວມກອງປະຊຸມການສຶກສາໂລກ 2015 ແລະ ໂດຍສະເພາະອົງການ UNESCO ເຊັ່ນດຽວກັນກັບຄູ່ຮ່ວມງານທຸກພາກສ່ວນ, ໃຫ້ສະໜັບສະໜູນບັນດາປະເທດແບບນິຕິບຸກຄົນ ແລະ ແບບສ່ວນລວມໃນການຈັດຕັ້ງປະຕິບັດວາລະການ ສຶກສາ 2030 ໂດຍການໃຫ້ຄໍາປຶກສາທາງດ້ານວິຊາການ, ການ ພັດທະນາຂີດຄວາມສາມາດໃນລະດັບຊາດ ແລະ ການສະໜັບສະໜູນທາງດ້ານການເງິນໂດຍອີງໃສ່ຄວາມຮັບຜິດຊອບຂອງບັນດາປະເທດ ນັ້ນໆ ຕາມລໍາດັບ ແລະ ຜົນປະໂຫຍດທີ່ມີການປຽບທຽບ ແລະ ການ ສ້າງຄວາມສໍາພັນທະໄມຕີລະຫວ່າງປະເທດດ້ວຍກັນ. ດ້ວຍເຫດນີ້, ພວກເຮົາຈິ່ງໄວ້ວາງໃຈກັບອົງການ UNESCO, ການຄົ້ນຄວ້າກັບ ສະມາຊິກຂອງລັດ, ຜູ້ເຂົ້າຮ່ວມກອງປະຊຸມການສຶກສາໂລກ 2015 ແລະ ຄູ່ຮ່ວມງານອື່ນໆ, ເພື່ອພັດທະນາກົນໄກການ ປະສານງານທີ່ ເໝາະສົມໃນລະດັບສາກົນ. ການຮັບຮູ້ກອງທຶນຮ່ວມມືສາກົນເພື່ອການສຶກສາເຊິ່ງເປັນເວທີໜຶ່ງໃນການສະໜອງເງິນຈາກຫຼາຍພາກສ່ວນ ເພື່ອການສຶກສາເພື່ອສະໜັບສະໜູນການຈັດຕັ້ງປະຕິບັດວາລະການສຶກສາຕາມຄວາມຕ້ອງການ ແລະ ບຸລິມະສິດຂອງບັນດາປະເທດ, ພວກເຮົາ ຂໍແນະນໍາວ່າ ເປັນພາກສ່ວນໜຶ່ງຂອງກົນໄກການປະສານງານໃນລະດັບໂລກໃນອານາຄົດ.

17. ໃນຕໍ່ໜ້າ, ພວກເຮົາຍັງໄວ້ເນື້ອເຊື່ອໃຈ UNESCO, ເຊິ່ງເປັນອົງການທີ່ມີຄວາມຊ່ຽວຊານຂອງສະຫະປະຊາຊາດສໍາລັບດ້ານການສຶກສາ, ເພື່ອສືບຕໍ່ບົດບາດດັ່ງກ່າວໃນການນໍາພາ ແລະ ປະສານງານວາລະ ການສຶກສາ 2030 ໂດຍສະເພາະ ການ ໂຄສະນາຕໍ່ພັນທະທາງດ້ານ ການເມືອງທີ່ຍືນຍົງ; ການອໍານວຍຄວາມສະດວກຄູ່ສົນທະນາທາງດ້ານນະໂຍບາຍ,ການແລກປ່ຽນຄວາມຮູ້ ແລະ ຕັ້ງມາດຕະຖານ; ການຕິດຕາມຄວາມຄືບໜ້າທີ່ກ້າວໄປສູ່ຄາດໝາຍການສຶກສາ; ຈັດກອງປະຊຸມພາກສ່ວນທີ່ກ່ຽວຂ້ອງໃນລະດັບຊາດ, ລະດັບພາກພື້ນ ແລະ ລະດັບສາກົນເພື່ອແນະນໍາການຈັດຕັ້ງປະຕິບັດວາລະການສຶກສາດັ່ງກ່າວ ແລະ ການປະຕິບັດໜ້າທີ່ເປັນຜູ້ຮັບຜິດຊອບສໍາລັບການສຶກສາຢູ່ໃນໂຄງຮ່າງການປະສານງານຂອງເປົ້າໝາຍການພັດທະນາແບບຍືນຍົງໂດຍລວມ.

18. ພວກເຮົາແກ້ໄຂບັນຫາການສ້າງລະບົບການປະເມີນຜົນ ແລະ ການຕິດຕາມໃນລະດັບຊາດຢ່າງລະອຽດຄົບຊຸດ ເພື່ອເປັນຫຼັກຖານທີ່ດີໃນການຜັນຂະຫຍາຍນະໂຍບາຍ ແລະ ການຄຸ້ມຄອງລະບົບການສຶກສາ, ພ້ອມນັ້ນ ກໍ່ເພື່ອຮັບປະກັນຄວາມຮັບຜິດຊອບເຊັ່ນ ດຽວກັນ. ໃນຕໍ່ໜ້າ, ພວກເຮົາຮຽກຮ້ອງໃຫ້ຜູ້ຮ່ວມຈັດກອງປະຊຸມການສຶກສາໂລກ 2015 ແລະ ຄູ່ຮວມງານຕ່າງໆ ເພື່ອສະໜັບສະໜູນການພັດທະນາຂີດຄວາມສາມາດໃນການເກັບກໍາຂໍ້ມູນ, ການວິເຄາະຂໍ້ມູນ ແລະ ການລາຍງານໃນລະດັບປະເທດ. ບັນດາປະເທດຕ່າງໆ ຄວນຈະຊອກຫາການປັບປຸງຄຸນນະພາບ, ລະດັບການແຍກ ແລະ ເສັ້ນເວລາຂອງການລາຍງານຕໍ່ສະຖາບັນ  UNESCO ທາງດ້ານ ສະຖິຕິ. ພວກເຮົາຍັງຮ້ອງຂໍວ່າບົດລາຍງານການຕິດຕາມການສຶກສາເພື່ອທຸກຄົນລະດັບໂລກໃຫ້ສືບຕໍ່ເປັນບົດລາຍງານການຕິດຕາມການສຶກສາເພື່ອທຸກຄົນລະດັບໂລກແບບເອກະລາດ (GEMR) ໂດຍອົງການ UNESCO ເປັນເຈົ້າພາບ ແລະ ຈັດພິມເຊິ່ງເປັນກົນໄກໃນການຕິດຕາມ ແລະ ລາຍງານກ່ຽວກັບເປົ້າໝາຍທີ 4 ຂອງເປົ້າໝາຍການພັດທະນາແບບຍືນຍົງ ແລະລາຍງານກ່ຽວກັບການສຶກສາຢູ່ໃນເປົ້າໝາຍອື່ນໆ ຂອງເປົ້າໝາຍການພັດທະນາແບບຍືນຍົງ, ກົນໄກຕ້ອງໄດ້ສ້າງຂຶ້ນເພື່ອຕິດຕາມ ແລະ ທົບທວນການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ.

19. ພວກເຮົາໄດ້ຄົ້ນຄວ້າ ແລະ ຕົກລົງເປັນເອກກະພາບກັນກ່ຽວກັບອົງປະກອບທີ່ສໍາຄັນຂອງຂອບການເຄື່ອນໄຫວການສຶກສາ 2030. ເມື່ອຄໍານຶງເຖິງກອງປະຊຸມສຸດຍອດສະຫະປະຊາຊາດເພື່ອການຮັບຮອງເອົາວາລະການພັດທະນາພາຍຫຼັງປີ 2015 (ນິວຢອກ, ກັນຍາ 2015) ແລະ ຜົນໄດ້ຮັບຂອງກອງປະຊຸມລະດັບສາກົນຄັ້ງທີ 3 ກ່ຽວກັບດ້ານການເງິນເພື່ອການພັດທະນາ (Addis Ababa, ກໍລະກົດ 2015), ສະບັບທີ່ສົມບູນຈະຖືກນໍາສະເໜີເພື່ອຮັບຮອງ ແລະ ນໍາໃຊ້ຢູ່ໃນກອງປະຊຸມລະດັບສູງພິເສດເພື່ອຈັດຕັ້ງຄຽງຄູ່ກັບລາຍການທີ 38 ຂອງກອງປະຊຸມທົ່ວໄປຂອງ UNESCO ໃນເດືອນພະຈິກ 2015. ພວກເຮົາມີພັນທະຢ່າງເຕັມສ່ວນຕໍ່ການຈັດຕັ້ງປະຕິບັດວາລະການພັດທະນາດັ່ງກ່າວພາຍຫຼັງມີການຮັບຮອງເອົາແລ້ວ, ພວກເຮົາມີພັນທະເພື່ອສ້າງແຮງບັນດານໃຈ ແລະ ແນະນໍາບັນດາປະເທດຕ່າງໆ ແລະຄູ່ຮ່ວມງານເພື່ອຮັບປະກັນວ່າວາລະການພັດທະນາຂອງພວກເຮົາບັນລຸຕາມຄາດໝາຍທີ່ວາງໄວ້.

20. ໂດຍອີງໃສ່ເນື້ອໃນຈິດໃຈຂອງຈອມທຽນ (Jomtien) ແລະ ດາກ້າ (Dakar), ຖະແຫຼງການອິນຊອນສະບັບນີ້ແມ່ນພັນທະທີ່ຄົບຊຸດຂອງທຸກຄົນຂອງພວກເຮົາເພື່ອຫັນປ່ຽນຊີວິດໂດຍຜ່ານວິໄສທັດໃໝ່ສໍາລັບການສຶກສາ, ໂດຍການເຄື່ອນໄຫວທີ່ມີນະວັດຕະກໍາແບບ ໃໝ່ ແລະ ແບບສະຫຼາດ ເພື່ອບັນລຸເປົ້າໝາຍທີ່ມີຄວາມຄາດຫວັງຂອງພວກເຮົາພາຍໃນປີ 2030.



ສະຖາປັດຕິຍາກໍາ ທີ່ໜ້າປະທັບໃຈໃນເຂດ ຊັງດ່າວ ເປັນສ່ວນທີ່ ຖືກສ້າງຂຶ້ນໃໝ່ຂອງ ນະຄອນອິນຊອນ

Newsletter № 2/2015

Education for Everyone. Worldwide.
Lifelong.

# ຖະແຫຼງການກອງປະຊຸມຂອງອົງການຈັດຕັ້ງທີ່ບໍ່ສັງກັດລັດ 2015

## *ກ້າວໄປສູ່ສິດທິຕໍ່ການສຶກສາຮຽນຮ່ວມຂອງລັດທີ່ມີຄຸນນະພາບ ແລະ ການຮຽນຮູ້ຕະຫຼອດຊີວິດພາຍຫຼັງປີ 2015*




1. ພວກເຮົາ, ຕົວແທນຂອງອົງການຈັດຕັ້ງທີ່ບໍ່ສັງກັດລັດ ໃນລະດັບຊາດ, ລະດັບພາກພື້ນ, ແລະ ລະດັບສາກົນ ແລະ ອົງການຈັດຕັ້ງທາງສັງຄົມຈາກຫຼາຍໆ ພາກສ່ວນຂອງ ໂລກໄດ້ມາຮ່ວມກັນໃນກອງປະຊຸມໃຫຍ່ຂອງອົງການຈັດຕັ້ງທີ່ບໍ່ສັງກັດລັດ ທີ່ ອິນຊອນ, ປະເທດສາທາລະນະລັດເກົາຫຼີ ໃນວັນທີ 18 ເຖິງ 19 ພຶດສະພາ 2015. ກອງປະຊຸມດັ່ງກ່າວໄດ້ ຈັດຂຶ້ນກ່ອນກອງປະຊຸມໃຫຍ່ ຂອງການສຶກສາໂລກ (WEF) 2015 ທີ່ມີກຳນົດຈະຈັດຂຶ້ນທີ່ ອິນຊອນ ໃນວັນທີ 19 ເຖິງ 21 ພຶດສະພາ 2015 ເພື່ອເປັນການກະກຽມ ການເຂົ້າຮ່ວມຢ່າງຫ້າວຫັນ ແລະ ການມີສ່ວນຮ່ວມຢ່າງມີປະສິດທິພາບ.

2. ພວກເຮົາຮັບຮູ້ເຖິງສະຖານະພາບຂອງ ການສຶກສາເພື່ອທຸກຄົນ (EFA) ບົນພື້ນຖານຂອງບົດລາຍງານການ ຕິດຕາມຂອງໂລກໃນປີ 2015, ເຊິ່ງມີການປະກອບຄຳເຫັນຈາກ ການປະເມີນການສຶກສາເພື່ອທຸກຄົນໂດຍເອກກະລາດ, ມີການຄົ້ນຄ້ວາກ່ຽວກັບການປະກອບສ່ວນຂອງອົງການຈັດຕັ້ງທາງ ສັງຄົມກ່ຽວກັບການສຶກສາເພື່ອທຸກຄົນຕັ້ງແຕ່ກອງປະຊຸມທີ່ Dakar ໃນ ປີ 2000. ມີການທົບທວນຄືນສະພາບຂອງຂະບວນການພາຍຫຼັງປີ 2015 ແລະ ວິເຄາະຖະແຫຼງການຂອງກອງປະຊຸມໃຫຍ່ການສຶກສາໂລກສະບັບຮ່າງ ແລະ ຂອບແຜນປະຕິບັດງານ. ຕາມການສົນທະນາ ຂອງພວກເຮົາໃນໄລຍະສອງມື້ຜ່ານມາ ພວກເຮົາໄດ້ຮັບຮອງເອົາຖະແຫຼງການດັ່ງກ່າວນີ້, ຊຶ່ງສະທ້ອນໃຫ້ເຫັນເຖິງແຮງບັນດານໃຈຂອງ ອົງການຈັດຕັ້ງສັງຄົມ ຄືດັ່ງ ພວກເຮົາຕັ້ງຕາລໍໃສ່ວຽກງານການສຶກສາໃນປີ 2030.

3. ພວກເຮົາຢືນຢັນອີກເທື່ອໜຶ່ງວ່າ ການສຶກສາແມ່ນພື້ນຖານສິດທິຂອງມະນຸດ ແລະ ຊັບສິນຂອງລັດທີ່ເປັນກຸນແຈສຳຄັນໃນການສົ່ງເສີມຄວາມຍຸຕິທຳທາງສັງຄົມ, ທາງເສດຖະກິດແລະທາງດ້ານສິ່ງແວດລ້ອມ. ລັດມີໜ້າທີ່ສະໜອງການສຶກສາທີ່ມີຄຸນນະພາບໃຫ້ທຸກຄົນໂດຍທີ່ບໍ່ມີຄ່າໃຊ້ຈ່າຍ ແລະ ການຮຽນຮູ້ຕະຫຼອດຊີວິດເພື່ອທຸກຄົນ ແລະ ເພື່ອຮັບປະກັນສິດທິໃນການສຶກສາທີ່ໄດ້ລະບຸໄວ້ໃນກົດໝາຍ ແລະ ສາມາດມີຜົນບັງຄັບໃຊ້. ເຖິງຢ່າງໃດກໍ່ຕາມພວກເຮົາຖືກເຕືອນໃຫ້ຮູ້ວ່າປັດຈຸບັນນີ້ມີເດັກ ແລະ ໄວໜຸ່ມຈຳນວນ 121 ລ້ານຄົນຍັງບໍ່ໄດ້ເຂົ້າ ໂຮງຮຽນ, ໂດຍມີຄວາມບໍ່ເທົ່າທຽມກັນຢ່າງຫຼວງຫຼາຍທາງດ້ານການ ເຂົ້າເຖິງການສຶກສາ ແລະ ຄຸນນະພາບຂອງການຮຽນ. ຢ່າງນ້ອຍສຸດຜູ້ໃຫຍ່ຈຳນວນ 781 ລ້ານຄົນແມ່ນຖືກ ປະຕິເສດສິດທິໃນການ ຮຽນຮູ້ໜັງສື, ໃນນັ້ນສອງສ່ວນສາມແມ່ນເປັນແມ່ຍິງ. ເພື່ອແກ້ໄຂ ບັນຫາດັ່ງກ່າວນີ້ ແລະ ສິ່ງ ທ້າທາຍອື່ນໆ ວຽກງານການສຶກສາ ພາຍຫຼັງປີ 2015 ຈຳຕ້ອງອີງໃສ່ສິດທິເປັນພື້ນຖານ, ຄວາມເຂົ້າໃຈຢ່າງກວ້າງຂວາງ, ຄົບຊຸດ ແລະ ຄວາມເຂົ້າໃຈຂອງການຮຽນຮູ້ຕະຫຼອດ ຊີວິດ, ບົດຮຽນຈາກອາດີດ, ຕ້ອງແກ້ໄຂເປົ້າໝາຍ ການສຶກສາເພື່ອທຸກຄົນທີ່ຍັງບໍ່ບັນລຸຢ່າງຈິງຈັງ ແລະ ຮັບປະກັນຄວາມຕັ້ງໃຈທີ່ກວ້າງໄກເພື່ອກະກຸ່ມປະຊາກອນທີ່ຍັງໜຸ່ມນ້ອຍ ແລະ ກະກຸ່ມຜູ້ໃຫຍ່ໃນການດຳລົງຊີວິດ ແລະ ເພື່ອໃຫ້ບັນລຸ ສິ່ງທ້າທາຍຕ່າງໆໃນສັດຕະວັດທີ 21.

4. ພວກເຮົາຍິນດີຕ້ອນຮັບ *ຖະແຫຼງການສະບັບຮ່າງ ແລະຂອບແຜນປະຕິບັດງານ*ສຳລັບກອງປະຊຸມໃຫຍ່ການສຶກສາໂລກທີ່ຄິດວ່າ ເນື້ອໃນພື້ນຖານຕ້ອງຮັກສາໄວ້ໂດຍບໍ່ມີການປ່ຽນແປງ, ທີ່ຄິດ ວ່າໂດຍບໍ່ມີການຖອຍຄືນຫຼັງຈາກຄວາມເຂົ້າໃຈດ້ານສິດທິມະນຸດໃນປະຈຸບັນ ແລະ ລະດັບຄວາມຕ້ອງການຂອງ ຄາດໝາຍ ແລະ ຄິດວ່າ ຄຳແນະນຳຢູ່ໃນຖະແຫຼງການດັ່ງກ່າວໄດ້ຖືກນຳໃຊ້ໃນຄະນະກຳມາທິການໃຫຍ່.

5. ນອກຈາກນີ້ ພວກເຮົາຍັງຫວັງວ່າເປົ້າໝາຍ ແລະ ຄາດໝາຍ ການສຶກສາຍັງຈະຖືກບັນຈຸເຂົ້າເປັນສ່ວນໜຶ່ງຂອງ *ເປົ້າໝາຍການພັດທະນາແບບຍືນຍົງ ຂອງສະຫະປະຊາຊາດ* ຊຶ່ງຈະຖືກຮັບຮອງເອົາໃນ ເດືອນກັນຍາ 2015, ດັ່ງນັ້ນ ການຮັບຮູ້ເຖິງບົດບາດທີ່ສຳຄັນຂອງການສຶກສາເພື່ອຄວາມຍຸຕິທຳທາງສັງຄົມ, ເສດຖະກິດ ແລະ ສິ່ງແວດລ້ອມ ແລະ ຄວາມເປັນໜຶ່ງດຽວຂອງສິດທິມະນຸດ. ພວກເຮົາສະໜັບສະໜູນຂໍ້ສະເໜີຂອງຜູ້ຊວຍພິທີ ກອນໃນການເຈລະຈາລະຫວ່າງລັດຖະບານຂອງນິວຢອກ ທີ່ນຳ ໃຊ້ x% ເຂົ້າໃນການຮຽນຮູ້ຂອງຜູ້ໃຫຍ່, ທັກສະ ແລະ ຄາດໝາຍ ຂອງຄູສອນ, ຊຶ່ງສິ່ງດັ່ງກ່າວຄວນຖືກທົດແທນໂດຍທັງໝົດ.

6. ພວກເຮົາເຫັນດີເປັນເອກະພາບນຳກັນວ່າ ເປົ້າໝາຍໃນການ "ຮັບປະກັນການສຶກສາຮຽນຮ່ວມທີ່ມີຄຸນນະພາບ ແລະ ທົ່ວເຖິງ ແລະ ສົ່ງເສີມໂອກາດການ



ຮຽນຮູ້ຕະຫຼອດຊີວິດເພື່ອທຸກຄົນ” ຕ້ອງເປັນທີ່ຕັ້ງວິໄສທັດລວມໝູ່ຂອງພວກເຮົາສໍາລັບວຽກງານພາຍຫຼັງປີ 2015. ໃນທີ່ສຸດ, ພວກເຮົາຮຽກຮ້ອງໃຫ້ມີພັນທະໃນການເຂົ້າຮຽນ 12 ປີ ໂດຍບໍ່ເສຍຄ່າ,ການສຶກສາໃນໂຮງຮຽນທີ່ມີຄຸນນະພາບ ໂດຍມີການສະໜັບສະໜູນຈາກລັດເພື່ອທຸກຄົນ ພາຍໃນ ປີ 2030, ໃນນັ້ນໄລຍະ 9 ປີ ຄວນຈະເປັນ ການສຶກສາ ພາກບັງຄັບ. ນອກຈາກນີ້, ພວກເຮົາຍັງຮຽກຮ້ອງໃຫ້ມີ ການສຶກສາ ແລະ ການດູແລເດັກກ່ອນໄວຮຽນເລີ່ມແຕ່ມື້ເກີດຈົນເຖິງ ເກນອາຍຸການເຂົ້າໂຮງຮຽນໂດຍບໍ່ໄດ້ເສຍຄ່າຮຽນຢ່າງຕໍ່ເນື່ອງ. ພວກເຮົາຂໍຢືນຢັນອີກເທື່ອໜຶ່ງວ່າຕ້ອງມີສິດທິ ໃນການເຂົ້າຮຽນ ໂດຍບໍ່ເສຍຄ່າ ແລະ ມີສິດທິໄດ້ຮັບການສຶກສາຊັ້ນສູງ ແລະ ອາຊີວະສຶກສາ ແລະ ຝຶກອົບຮົມ ວິຊາຊີບຂອງລັດທີ່ມີຄຸນນະພາບ. ແຕ່ລະປະເທດຄວນກໍານົດມາດຕະຖານ ແລະ ຈຸດໝາຍໃຫ້ຊັດເຈນ ເພື່ອກໍານົດວ່າມາດຕະຖານ ແລະ ຈຸດໝາຍດັ່ງກ່າວຈະບັນລຸໄດ້ແນວໃດ.

7. ພວກເຮົາຕ້ອງມີຄວາມຕັ້ງໃຈຢ່າງຫຼວງຫຼາຍໃສ່ວ່າພັນທະຕໍ່ການຮຽນຮູ້ຕະຫຼອດຊີວິດມີຄວາມໝາຍແນວໃດແທ້. ເປັນວິທີການທີ່ເປັນການທັນ ປ່ຽນ, ພັນທະຕໍ່ວິໄສທັດຂອງການຮຽນຮູ້ນັ້ນຈະຕ້ອງເລີ່ມແຕ່ມື້ເກີດ ແລະ ຕະຫຼອດຊີວິດ ແລະ ລວມທັງການສຶກສາໃນໂຮງຮຽນ, ນອກໂຮງຮຽນ, ການຮຽນຮູ້ຕາມອັດທະຍາໄສທີ່ມີຄຸນນະພາບ, ການຮັບຮູ້ໝົດທຸກຄົນເລີ່ມແຕ່ ເດັກ, ໄວໜຸ່ມ, ແລະ ຜູ້ໃຫຍ່ຈົນເຖິງຜູ້ສູງອາຍຸແມ່ນເປັນຜູ້ມີສິດທິ. ພື້ນຖານທີ່ມີຢູ່ໃນການສຶກສາ ແລະ ການດູແລເດັກກ່ອນໄວຮຽນແມ່ນມີຄວາມສໍາຄັນຫຼາຍໃນການສົ່ງເສີມການຢູ່ດີ ກິນດີ ແລະ ເພື່ອເສີມຂະຫຍາຍການພັດທະນາຂອງຊາດ ແລະ ຄວາມສາມັກຄີຂອງສັງຄົມ. ການສຶກສາ ແລະ ການດູແລເດັກກ່ອນໄວຮຽນ (ECCE) ຕ້ອງໜັກແໜ້ນ ແລະ ລະອຽດ, ເຄົາລົບລັກສະນະ ທີ່ພິເສດຂອງເດັກ ແລະ ຮັບປະກັນວ່າທຸກຄົນໄດ້ໃຊ້ຄວາມສາມາດຕົນເອງຢ່າງເຕັມສ່ວນ. ເຊັ່ນດຽວກັນ, ນະໂຍບາຍ ແລະ ແຜນງານການຮູ້ໜັງສືຂອງຜູ້ໃຫຍ່ຕ້ອງໄດ້ເປັນບຸລິມະສິດ ແລະ ໄດ້ຮັບທຶນສະໜັບສະໜູນຈາກລັດ, ຕ້ອງເໝາະສົມ ກັບການດໍາລົງຊີວິດຂອງຜູ້ໃຫຍ່ ແລະ ຕ້ອງອອກແບບກັບຜູ້ຮຽນໂດຍເລັງ ໃສ່ການໃຫ້ອໍານາດເຂົາເປັນຢ່າງດີ. ໃນຕໍ່ໜ້າການບັນລຸການຮຽນຮູ້ຕະຫຼອດຊີວິດຕ້ອງເຮັດໃຫ້ທຸກອຸປະສັກຕໍ່ຄວາມຄືບໜ້າໂດຍຜ່ານວົງຈອນການສຶກສາຕ່າງໆຕ້ອງຖືກລຶບລ້າງໃຫ້ໝົດ ລວມທັງການຮັບຮູ້ກ່ອນການຮຽນຮູ້ຕາມອັດທະຍາໄສ ແລະ ການຮຽນຮູ້ໃນໂຮງຮຽນ.



8. ພວກເຮົາຢາກເນັ້ນເຖິງຄວາມຮຽກຮ້ອງຂອງພວກເຮົາທີ່ວ່າ ຄວາມສະເໝີພາບ ແລະ ຄຸນນະພາບແມ່ນການແກ້ໄຂທຸກໄວທັງໝົດ, ພ້ອມນັ້ນພາຍນອກການຕັ້ງຄ່າການສຶກສາຢ່າງເປັນທາງການ. ເນັ້ນໜັກໃສ່ເປັນພິເສດຄວນ ໃຫ້ກັບຜູ້ດ້ອຍໂອກາດລວມມີບົດບາດຍິງຊາຍ, ເຊື້ອຊາດ, ພາສາ, ສາສະໜາ, ຊົນເຜົ່າ, ຊົນເຜົ່າພື້ນເມືອງ, ຄວາມ ພິການ, ແນວໂນ້ມທາງເພດ, ສະພາບຮ່າງກາຍ, ສະຖານທີ່ ຕັ້ງພູມສາດ, ສະຖານະ ຜູ້ລີ້ໄພ ຫຼື ຜູ້ອົບພະຍົບ, ສະພາບເສດຖະກິດ-ສັງຄົມ, ອາຍຸ, ພາວະສຸກເສີນ, ໄພພິບັດ ແລະ ຂໍ້ຂັດແຍ່ງ, ແລະອື່ນໆ. ພວກເຮົາຮັບຮູ້ວ່າແມ່ຍິງ ແລະ ເດັກຍິງ ແມ່ນຈັດຢູ່ໃນກຸ່ມປະເຊີນກັບຮູບແບບການເພີ່ມເຕີມ, ທີ່ຫຼາກຫຼາຍ ແລະ ຕັດການຈໍາແນກ. ລັດ ແລະ ອົງການຈັດຕັ້ງບໍ່ຄວນແຍກຄວາມສະເໝີພາບອອກຈາກ ຄຸນນະພາບ ລວມທັງຢູ່ໃນຂໍ້ ຂັດແຍ່ງ, ຜົນກະທົບ ແລະ ພື້ນທີ່ໄພ ພິບັດ. ສິ່ງທ້າທາຍທີ່ປະເຊີນກັບລະບົບການສຶກສາ ເພື່ອຮັບປະກັນ ລະບົບຄວາມສະເໝີພາບ ໃນຄຸນນະພາບຂອງການສຶກສາ, ສິ້ນສຸດ ທີ່ລະບົບການຄັດແຍກ ແລະ ແບ່ງແຍກຂອງຄວາມບໍ່ເທົ່າທຽມກັນ ໃນສັງຄົມ. ຂະນະທີ່ການຮັບປະກັນຄຸນນະພາບສໍາລັບທຸກລະບົບການສຶກສາຕ້ອງສົມລະເສີນຄວາມຫຼາກຫຼາຍຂອງພາສາ ແລະ ວັດທະນະທໍາ, ຕໍ່ຕ້ານການຂັບເຂື່ອນໄປສູ່ມາດຕະຖານທີ່ອາດທໍາລາຍຄວາມຫຼາກຫຼາຍ. ໂດຍສະເພາະ ແມ່ນຄວນ ໄດ້ຖືກບັນຈຸຢູ່ໃນເດັກທີ່ອອກຈາກໂຮງຮຽນ ແລະ ຊາວໜຸ່ມ, ລວມທັງ ຜູ້ທີ່ດໍາລົງຊີວິດໃນເຂດທີ່ມີຜົນ ກະທົບຈາກຂັດແຍ່ງ, ໃນການສະໜອງໂອກາດການສຶກສາ, ເຊັ່ນດຽວກັນກັບການສ້າງທາງເດີນໃຫ້ເຂົາເຈົ້າມີລະບົບຢ່າງເປັນ ທາງການ. ພວກເຮົາສະໜັບສະໜູນຄໍາໝັ້ນສັນຍາວ່າເປົ້າໝາຍມີ ໄວ້ໃຫ້ບັນລຸ ເວັ້ນເສຍແຕ່ທຸກຄົນໄດ້ຄົ້ນພົບຫລືບໍ.

9. ຄຸນນະພາບການສຶກສາຂະຫຍາຍເກີນການຮູ້ໜັງສື ແລະ ການຄິດໄລ່ທີ່ລວບລວມໄດ້ຜ່ານຈາກຄວາມຮູ້ ຄວາມສາມາດ ແລະຄຸນຄ່າ, ເຊັ່ນດຽວກັນກັບການສົ່ງເສີມແນວຄິດທີ່ສໍາຄັນ, ຄວາມຄິດສ້າງສັນ, ຄວາມສາມັກຄີປຶກສາຫາລື ແລະແກ້ໄຂບັນຫາ. ມັນແມ່ນຮາກຖານຢູ່ໃນປະສົບການການຮຽນຮູ້ປະຕິບັດ ແລະ ລວມຄວາມປອດໄພ, ແລະ ສະພາບແວດລ້ອມການຮຽນທັງໝົດ; ຄູອາຈານທີ່ມີແຮງຈູງໃຈ ແລະ ມີຄຸນຄ່າ, ອຸປະກອນມີຄຸນນະພາບສູງເຊັ່ນດຽວກັນ ຫຼັກສູດທີ່ກ່ຽວຂ້ອງຢ່າງກວ້າງຂວາງ, ທີ່ໄດ້ລວມເອົາການສຶກສາສິດທິມະນຸດ, ການສຶກສາສໍາລັບການພັດທະນາແບບຍືນຍົງ ແລະ ການສຶກສາພົນລະເມືອງໃນທົ່ວໂລກ. ຄຸນຄ່າຂອງການສຶກສາມີຄຸນນະພາບຂອງແຕ່ລະບຸກຄົນ ແລະ ວັດທະນະທໍາ ແລະ ຄວາມຫຼາກຫຼາຍຂອງພາສາ, ເພີ່ມຄວາມເຂັ້ມແຂງຊາທິປະໄຕ ແລະ ສົ່ງເສີມສັນຕິພາບ. ຂະບວນການການຮຽນຮູ້ຈະຕ້ອງເປັນໄປຕາມວິທີການຮຽນເປັນຈຸດສູນກາງ.

10. ສູນກາງໃນການບັນລຸເປົ້າໝາຍທັງໝົດການສຶກສາ, ຄວາມສະເໝີພາບ, ຄຸນນະພາບການສຶກສາ ແລະ ການຮຽນຮູ້ສໍາລັບທຸກຄົນແມ່ນຄູອາຈານຜູ້ທີ່ຖືກຝຶກອົບຮົມໄດ້ດີ, ມີຄຸນສົມບັດເປັນມືອາຊີບ ແລະ ມີຄຸນຄ່າທີ່ດີບໍ່ໜ້ອຍກ່ວາຜູ້ຊ່ຽວຊານທີ່ມີຄຸນນະວຸດທິທີ່ເປັນມືອາຊີບໃນຂະແໜງການບໍລິການຂອງລັດ ຫຼື ເອກະຊົນ. ລັດຖະບານຄວນເພີ່ມທະວີການລົງທຶນໃນການສຶກສາຄູອາຈານ ແລະ ສະໜັບສະໜູນການພັດທະນາຢ່າງຕໍ່ເນື່ອງເປັນມືອາຊີບ, ແລະ ສະໜັບສະໜູນຮັບປະກັນຄວາມອ່ອນໄຫວບົດບາດຍິງຊາຍ ແລະ ການຝຶກອົບຮົມ. ພວກເຂົາເຈົ້າຈໍາເປັນ ຕ້ອງໄດ້ສ້າງເງື່ອນໄຂການເຮັດວຽກທີ່ດີ ແລະ ໜ້າສົນໃຈສໍາລັບ ຄູອາຈານທັງໝົດ, ສະໜັບສະໜູນການສຶກສາບຸກຄະລາກອນ ແລະ ຜູ້ນໍາດ້ານການສຶກສາ. ອົງການຈັດຕັ້ງຄູອາຈານຕ້ອງໄດ້ຮັບການເຄົາລົບນັບຖື ແລະ ການຍອມຮັບເປັນນັກສະແດງເອກະລາດ ແລະ ກະທໍາ. ພວກເຂົາເຈົ້າຈະຕ້ອງເປັນສູນກາງການມີສ່ວນຮ່ວມໃນການປຶກສາຫາລືທັງໝົດທາງສັງຄົມທີ່ກ່ຽວຂ້ອງກັບ ນະໂຍບາຍການສຶກສາ, ເງິນເດືອນ ແລະ ສະພາບຂອງການບໍລິການ ແລະ ການຮັບປະກັນ ໂດຍຜ່ານບົດບັນຍັດ. ເນື່ອງຈາກເປັນສູນກາງຂອງເປົ້າໝາຍທີ່ ຄູອາຈານຄວນຈະມີເສັ້ນຂີດໝາຍທັນທີທັນໃດຂອງ 2020.

11. ໃນຂະນະທີ່ທັງໝົດແມ່ນການສະໜັບສະໜູນຂອງຂອບວຽກງານ ການເຄື່ອນໄຫວ ພວກເຮົາມີຄວາມເປັນຫ່ວງເປັນໄຍຢ່າງເລິກເຊິ່ງ ຕໍ່ກັບບັນດາຕົວຊີ້ບອກທີ່ຄັບແຄບຢູ່ໃນເອກກະສານຊ້ອນທ້າຍຂອງຂອບວຽກງານການເຄື່ອນໄຫວ. ເພື່ອບັນລຸເປົ້າໝາຍ ພວກເຮົາຂໍແນະນຳຢ່າງຕັ້ງໜ້າວ່າຕົວຊີ້ບອກລະດັບຊາດ ແລະ ພາກພື້ນຕ້ອງສະແດງໃຫ້ເຫັນຂໍ້ຈຳກັດຂອງຊ່ອງວ່າງໃນການເຂົ້າເຖິງທີ່ຂະຫຍາຍກວ້າງອອກ ແລະ ບັນລຸເປົ້າໝາຍລະຫວ່າງຜູ້ຮັ່ງມີທີ່ສຸດ 20% ແລະ ຜູ້ທີ່ທຸກຍາກທີ່ສຸດ 40%, ທີ່ໄດ້ປະເມີນໃນແຕ່ລະ 5 ປີ. ພວກເຮົາຕ້ອງມີຊຸດຂອງຕົວຊີ້ບອກທີ່ຈິງຈັງ ແລະ ຄົບຊຸດຫຼາຍຂຶ້ນ, ນັບທັງ ທົ່ວໄປ ແລະ ສະເພາະເລື່ອງ ເຊິ່ງສອດຄ່ອງກັນກັບພັນທະສິດທິມະນຸດທີ່ມີຢູ່ໃນປັດຈຸບັນ ແລະ ສອດ ຄ່ອງກັບເນື້ອໃນ ແລະ ເປົ້າໝາຍ ແລະ ຊຸດຄາດໝາຍການສຶກສາຢ່າງເຕັມ ສ່ວນ. ຕ້ອງມີຄວາມຕັ້ງໃຈໃສ່ສະເພາະ ເພື່ອຮັບປະກັນວ່າມີຕົວຊີ້ບອກທີ່ຫຼາກຫຼາຍສຳລັບການສຶກສາທີ່ມີຄຸນນະພາບທີ່ຮັບຮູ້ເຖິງ ແລະ ຕິດຕາມການຊ່ວຍ ເຫຼືອ, ຂະບວນການ ແລະ ປະເພດຂອງ ຜົນໄດ້ຮັບ. ສິ່ງພົວພັນເຖິງການຮຽນ, ການເນັ້ນໜັກຄວນເອົາໃຈໃສ່ການສ້າງຄວາມເຂັ້ມແຂງໃຫ້ແກ່ການປະເມີນແບບສອບຖາມ ເຊິ່ງສາມາດຊ່ວຍໃຫ້ເປັນທິດທາງໃນການປັບປຸງທາງດ້ານການປະຕິບັດ ດີກວ່າການເນັ້ນໜັກໃສ່ຢ່າງລົ້ນເຫຼືອໃສ່ການສອບເສັງ ແລະ ການປຽບທຽບທີ່ໄດ້ມາດຕະຖານຂອງສາກົນ. ຕ້ອງຮັບຮູ້ຢ່າງຈະແຈ້ງວ່າການຕັ້ງຕົວຊີ້ບອກແມ່ນການເຄື່ອນໄຫວ ທາງດ້ານການເມືອງ, ເຊິ່ງບໍ່ແມ່ນ ທາງວິຊາການແຕ່ຢ່າງໃດ ແລະ ຕ້ອງຮັບຮູ້ ຢ່າງຈະແຈ້ງວ່າການອະນຸມັດ ສຸດທ້າຍຂອງຕົວຊີ້ບອກໃນແຕ່ລະຫົວຂໍ້ຕ້ອງ ຂຶ້ນກັບການຕິດຕາມກວດກາ ທາງດ້ານປະຊາທິປະໄຕທີ່ເໝາະສົມ.

12. ພວກເຮົາຂໍຕ້ອນຮັບກັບການຍ້ອງຍໍສັນລະເສີນຕໍ່ກັບຄຳທີ່ວ່າ*ການມີສ່ວນຮ່ວມຂອງອົງການຈັດຕັ້ງທາງສັງຄົມ* ຄວນຈະເປັນອົງກອນ ແລະ ຮັບປະກັນໃນທຸກຂະບວນການ ເຊິ່ງມີຄວາມສຳຄັນໃນການຮັບປະກັນວ່າລັດຖະບານ ຖືກຈັດຂຶ້ນເພື່ອຮັບຜິດຊອບ ແລະ ເພື່ອບັນລຸການສຶກສາຮຽນຮ່ວມ, ການສຶກສາທີ່ມີຄຸນນະພາບເພື່ອທຸກຄົນ. ຄວາມຮັບຜິດຊອບ, ຄວາມໂປ່ງໃສ ແລະ ຄວາມສຳຄັນຂອງບົດບາດການຈັບຕາເອົາຂອງອົງການຈັດຕັ້ງທາງສັງຄົມ ລວມທັງການຕິດຕາມການໃຊ້ຈ່າຍ, ໃນລະຫວ່າງການຈັດຕັ້ງປະຕິບັດ ແລະ ການຕິດຕາມວຽກງານພາຍຫຼັງປີ 2015 ຕ້ອງໄດ້ຮັບຮູ້ຢ່າງແທ້ຈິງ. ພວກເຮົາຂໍແນະນຳວ່າ ຕ້ອງໄດ້ຮວບຮວມເອົາທຸກພາກສ່ວນທີ່ກ່ຽວຂ້ອງຢ່າງຈະແຈ້ງ ລວມທັງສະຫະພັນຄູສອນ, ກຸ່ມພໍ່ແມ່ນັກຮຽນ ແລະ ຜູ້ຕາງໜ້າການເຄື່ອນໄຫວຂອງນັກຮຽນ ເຊັ່ນດຽວກັນກັບອົງການຈັດຕັ້ງທີ່ບໍ່ສັງກັດລັດ, ເດັກ ແລະ ຜູ້ນຳພາການເຄື່ອນໄຫວຂອງຊາວໜຸ່ມ, ຊຸມຊົນ, ອົງການຈັດຕັ້ງຂອງຜູ້ຮຽນ, ອົງການຈັດຕັ້ງຂອງຄົນພິການ, ອົງການຈັດຕັ້ງຊົນເຜົ່າພື້ນເມືອງ, ສະຖາບັນຄົ້ນຄວ້າ ແລະ ວິຊາການ, ອົງການຈັດຕັ້ງແມ່ຍິງ ແລະ ການເຄື່ອນໄຫວທາງສັງຄົມອື່ນໆ ທີ່ເຫັນວ່າເປັນກຸ່ມທີ່ບໍ່ໄດ້ເຂົ້າຮ່ວມ. ຜູ້ເຄື່ອນໄຫວທີ່ມາຈາກຫຼາຍພາກສ່ວນເຫຼົ່ານີ້ຕ້ອງໄດ້ເຂົ້າຮ່ວມຢ່າງມີຄວາມໝາຍຢູ່ໃນທຸກຂັ້ນຕອນຂອງການປຶກສາຄົ້ນຄວ້າທາງດ້ານນະໂຍບາຍ, ການວາງແຜນ, ການຕັດສິນໃຈ, ການຕິດຕາມ ແລະ ການປະເມີນຜົນ ຂອງວຽກງານການສຶກສາ 2030. ນອກນັ້ນ, ສິດທິມະນຸດກໍ່ສາມາດບັນລຸໄດ້ພຽງແຕ່ໃນ ສະພາວະຄວາມເປັນຈິງ ຂອງປະຊາທິປະໄຕທີ່ຮັບຮູ້ເຖິງ ການມີສ່ວນຮ່ວມຕາມສິດທິໃນຕົວມັນເອງ. ໃນທີ່ສຸດ, ພວກເຮົາຂໍປະນາມ ແລະ ຮຽກຮ້ອງໃຫ້ຢຸດຕິຄວາມແບ່ງແຍກ, ການຂົ່ມເຫັງ ແລະ ຄວາມຜິດທາງອາຍາຂອງນັກເຄື່ອນໄຫວ ແລະ ການເຄື່ອນໄຫວຂອງອົງການຈັດຕັ້ງທາງສັງຄົມທີ່ພວກເຮົາກຳລັງເປັນ ພະຍານໃນປັດຈຸບັນໃນທົ່ວທະວີບ ແລະ ເຊິ່ງເປັນອັນຕະລາຍຕໍ່ສິດທິໃນການສຶກສາຢ່າງເຕັມສ່ວນ.

13. ພວກເຮົາມີຄວາມເປັນຫ່ວງຢ່າງເລິກເຊິ່ງ ແລະ ຍັງ ປະນາມຢ່າງແຮງຕໍ່ໄພຂົ່ມຂູ່ຢ່າງຕໍ່ເນື່ອງຕໍ່ກັບສິດທິ ໃນການສຶກສາຍ້ອນວ່າເຫດການໃນການໂຈມຕີ ແລະ ຄວາມຮຸນແຮງເພີ່ມຂຶ້ນເລື້ອຍໆ ຢູ່ໃນ ແລະ ອ້ອມຮອບສະຖາບັນການສຶກສາ, ນຳໄປສູ່ການ ບາດເຈັບລົ້ມຕາຍຂອງນັກຮຽນ ແລະ ບູກຄະລາກອນ. ນອກນັ້ນ, ຄວາມຕ້ອງ ການທີ່ຮຸນແຮງທາງດ້ານບົດບາດຍິງ-ຊາຍ, ທີ່ພົວພັນກັບໂຮງຮຽນຕ້ອງໄດ້ຈົດຈຳໄວ້ວ່າເປັນອຸປະສັກທີ່ສຳຄັນຕໍ່ການສຶກສາໂດຍສະເພາະແມ່ນສຳລັບເດັກຍິງ. ຄວາມຕ້ອງການທີ່ຕ້ອງເອົາໃຈໃສ່ຕື່ມແມ່ນເລັ່ງໃສ່ການແກ້ໄຂສາເຫດທີ່ເປັນພື້ນຖານຂອງການຂັດແຍ່ງ ແລະ ຄວາມຮຸນແຮງ. ເປັນສິ່ງບໍ່ຄ່ອຍດີປານໃດທີ່ລັດຖະບານຫຼາຍໆປະເທດທີ່ລົງທຶນໃສ່ການທະຫານຫຼາຍກວ່າ ແລະ/ຫຼື ເພີ່ມລາຍຈ່າຍຂອງປະເທດໃສ່ການທະຫານຫຼາຍກວ່າໃສ່ການສຶກສາຢ່າງໄວວາ. ລະບົບການສຶກສານັບທັງໃນໂຮງຮຽນ ແລະ ນອກໂຮງຮຽນ ຄວນສົ່ງເສີມວັດທະນະທຳຂອງສັນຕິພາບ, ຄວາມເຂົ້າໃຈ ລະຫວ່າງວັດທະນະທຳ, ຄວາມ ສາມັກຄີ ແລະ ຄວາມອົດທົນ, ການເຮັດວຽກເພື່ອເອົາຊະນະ ທຸກຮູບແບບຂອງການຂັດແຍ່ງໃນທຸກລະດັບ.

14. ວຽກງານການສຶກສາພາຍຫຼັງປີ 2015 ບໍ່ສາມາດບັນລຸໄດ້ ຖ້າບໍ່ມີເງິນທີ່ພຽງພໍ. ສະນັ້ນ ພວກເຮົາຈິ່ງຮຽກຮ້ອງດັ່ງຕໍ່ໄປນີ້:

a. ລັດຖະບານຂອງຊາດຄວນປະຕິບັດຕາມມາດຕະຖານຂອງສາກົນຢ່າງແທ້ຈິງເພື່ອຮັບປະກັນດ້ານການເງິນພາຍໃນປະເທດເພີ່ມໃສ່ການສຶກສາ ໂດຍມີການຈັດສັນຢ່າງໜ້ອຍ 6% ຂອງຍອດຜະລິດຕະພັນພາຍໃນ ແລະ ຢ່າງໜ້ອຍສຸດ 20% ຂອງງົບປະມານຂອງຊາດເຂົ້າໃນການສຶກສາ. ການນຳໃຊ້ຈຳນວນ 15-20% ແລະ 4-6% ຕາມທີ່ໄດ້ກຳນົດໄວ້ໃນຂອບວຽກງານການເຄື່ອນໄຫວ (FFA) ເຮັດໃຫ້ມາດຕະຖານທີ່ສຳຄັນດັ່ງກ່າວເບົາບາງລົງ.

b. ຄວາມຕ້ອງການທີ່ຕ້ອງເອົາໃຈໃສ່ຕື່ມແມ່ນການຂະຫຍາຍຖານແຫຼ່ງທຶນພາຍໃນ. ໃນຂະນະທີ່ພວກເຮົາຕ້ອນຮັບຫຼັກຖານຂອງຂອບວຽກງານການເຄື່ອນໄຫວເພື່ອຂະຫຍາຍຖານ ອາກອນ ແລະ ສິ່ງທ້າທາຍສິ່ງຈູງໃຈທາງດ້ານອາກອນທີ່ ອັນຕະລາຍ ພວກເຮົາຕ້ອງຕໍ່ຕ້ານບໍ່ພຽງແຕ່ການຫຼີກຫຼ່ຽງພາສີ ແຕ່ການຫຼີກຫຼ່ຽງພາສີຢ່າງຈິງໃຈ, ເຊິ່ງ ເຖິງວ່າໃນດ້ານກົດໝາຍ ກໍ່ສາມາດຜິດສິນທຳໃນ



Newsletter № 2/2015

Education for Everyone. Worldwide.
Lifelong.

ການປະຕິເສດບັນດາປະເທດທີ່ ຕ້ອງການທຶນສະໜັບສະໜູນເພື່ອສະໜອງໃຫ້ສິດທິຕໍ່ການສຶກສາ. ພວກເຮົາຮ່ວມກັນຮຽກຮ້ອງໃຫ້ບັນດາຄະນະລະຫວ່າງລັດຖະບານທີ່ມີອຳນາດກ່ຽວກັບພາສີທີ່ມີ ໜ້າທີ່ຮັບຜິດຊອບໃນ ການຕັ້ງກົດລະບຽບກ່ຽວກັບພາສີ ແລະ ມີອຳນາດໃນການ ບັງຄັບກົດລະບຽບດັ່ງກ່າວໃຫ້ເປັນບາດກ້າວທີ່ສຳຄັນໃນການຢຸດຕິການລະເມີດພາສີ.

c. ຜູ້ໃຫ້ທຶນຕ້ອງມີພັນທະຕໍ່ຄາດໝາຍທີ່ຈະແຈ້ງ - ຫຼືວ່າຈະເພີ່ມການຊ່ວຍເຫຼືອໃສ່ການສຶກສາສອງເທົ່າ ຫຼື ຈະຮັບ ປະກັນວ່າຢ່າງໜ້ອຍສຸດ 10% ຂອງການຊ່ວຍເຫຼືອແມ່ນໃຊ້ຈ່າຍເຂົ້າໃນການສຶກສາຂັ້ນພື້ນຖານ. ການນຳດາກ້າ (Dakar) ໄດ້ສະເໜີກ່ຽວກັບຄວາມ ຕ້ອງການທາງດ້ານການເງິນເພື່ອຖະແຫຼງຢ່າງຈະແຈ້ງຢູ່ໃນຖະແຫຼງການອິນຊອນ ແລະ ແຈກຢາຍຢ່າງແທ້ຈິງໃນປີໜ້ານີ້. ຜູ້ໃຫ້ທຶນຕ້ອງວາງບຸລິມະສິດ ການຊ່ວຍເຫຼືອໃຫ້ບັນດາປະເທດທີ່ລາຍຮັບຕ່ຳ ແລະ ບັນດາປະເທດທີ່ດ້ອຍໂອກາດ ແລະ ປະເທດຖືກກະທົບທາງດ້ານຂໍ້ຂັດແຍ່ງກັນ. ການຊ່ວຍເຫຼືອເຂົ້າໃນການສຶກສາໃນດ້ານຄວາມຕ້ອງການຕົວຈິງທາງດ້ານມະນຸດສະທຳຢ່າງໜ້ອຍສຸດຕ້ອງເປັນສອງເທົ່າຈາກພື້ນຖານຕ່ຳແຕ່ 2% ຫາ 4%. ຍິ່ງໄປກວ່ານັ້ນ, ການຍົກເລີກໜີ້ສິນຕາມຄວາມຕ້ອງການຂອງການສຶກສາຕ້ອງໄດ້ເນັ້ນໜັກຕື່ມອີກ.

d. ລັດຖະບານ ແລະ ບັນດາຜູ້ໃຫ້ທຶນຄວນວາງບຸລິມະສິດໃນການໃຊ້ຈ່າຍເພື່ອໃຫ້ບັນລຸເປົ້າໝາຍ ແລະ ຄາດໝາຍສຳລັບປະຊາຄົມທີ່ດ້ອຍໂອກາດ. ການໃຊ້ຈ່າຍໃສ່ການເພີ່ມຄວາມເທົ່າທຽມກັນເພື່ອປັບປຸງຄຸນນະພາບຂອງຊີວິດເພື່ອທຸກຄົນ.

e. ການວາງແຜນທາງດ້ານການເງິນສຳລັບກອງປະຊຸມການພັດທະນາຢູ່ Addis Ababa ຕ້ອງອອກມາໂດຍມີຂອບວຽກງານທີ່ລະອຽດໃນການສະໜັບສະໜູນເປົ້າໝາຍການພັດທະນາແບບຍືນຍົງທາງດ້ານການເງິນພາຍຫຼັງປີ 2015. ພວກເຮົາຮຽກຮ້ອງໃຫ້ບັນດາລັດຖະບານ ແລະ ຄູ່ຮ່ວມງານໃຫ້ຮັບປະກັນວ່າເອກະສານຜົນໄດ້ຮັບຂອງ Addis ມີພັນທະໃນການໃຫ້ທຶນສະໜັບສະໜູນເປົ້າໝາຍການສຶກສາ ແລະ ທຸກຢ່າງຂອງຄາດໝາຍ, ໂດຍມີມາດຕະຖານຕ່ຳສຸດສະເພາະສຳລັບການໃຫ້ທຶນສະໜັບສະໜູນຂອງພາຍໃນ ແລະ ການສະໜັບສະໜູນຈາກຕ່າງປະເທດທີ່ໄດ້ອະທິບາຍຢູ່ໃນວັກທີ 14 (a) ແລະ (c) ຂ້າງເທິງນີ້.

f. ກອງທຶນຮ່ວມມືສາກົນເພື່ອການສຶກສາຕ້ອງຈັດສັນແຜນຍຸດທະສາດ ແລະ ກົນໄກການໃຫ້ທຶນສະໜັບສະໜູນຂອງກອງທຶນໃສ່ເປົ້າໝາຍ ແລະ ຄາດໝາຍການສຶກສາທີ່ໄດ້ຕົກລົງກັນແລ້ວ. ກອງທຶນດັ່ງກ່າວຕ້ອງສະໜັບສະໜູນບັນດາປະເທດເພື່ອສ້າງແຜນຂອງຂະແໜງການສຶກສາຢ່າງລະອຽດ ແລະ ຕ້ອງຫຼີກຫຼ່ຽງການສ້າງເປົ້າໝາຍ, ຈຸດປະສົງ ແລະ ຄາດໝາຍແບບຂະໜານກັນ.

g. ຕ້ອງມີພັນທະທີ່ຈະແຈ້ງຂຶ້ນຕື່ມເພື່ອຮັບປະກັນວ່າເງິນຂອງລັດທັງໝົດ (ລວມທັງເງິນການຊ່ວຍເຫຼືອທີ່ເພີ່ມຂຶ້ນຈາກຜູ້ຈ່າຍພາສີ)ຖືກຈ່າຍເຂົ້າໃນການສຶກສາຂອງລັດ ແລະ ບໍ່ແມ່ນ ການສະໜັບສະໜູນ ຫຼື ການອຸດໜູນເພື່ອໃຫ້ເກີດຜົນກຳໄລໃນທຸກກໍລະນີ. ການປະກອບສ່ວນ ຂອງພາກເອກະຊົນເຂົ້າໃນຂະແໜງການ ສຶກສາຕ້ອງມີເປົ້າໝາຍເພື່ອເສີມສ້າງຄວາມຕ້ອງການການລົງທຶນຂອງລັດຢ່າງຫຼວງຫຼາຍໃສ່ການສຶກສາ ແລະ ຄົ້ນຄວ້າວິໄຈດີກວ່າເພື່ອທົດແທນບົດບາດຂອງລັດຖະບານຂອງຊາດ. ສະນັ້ນ, ພວກເຮົາຢືນຢັນວ່າ ການສຶກສາຄືສິນຄ້າຂອງລັດ ແລະ ການປະຕິເສດທີ່ຮຽກຮ້ອງໃຫ້ການລົງທຶນ ຈາກພາກເອກະຊົນຫຼາຍຂຶ້ນ ຫຼື ແບບການຄ້າຢູ່ໃນການສຶກສາ, ລວມທັງການສະໜັບສະໜູນໂຮງຮຽນເອກະຊົນທີ່ມີຄ່າຮຽນຖືກ ແລະ ບັນດາມະຫາວິທະຍາໄລເພື່ອຜົນກຳໄລ. ບົນຄວາມສະເໝີພາບແລ້ວ ພວກເຮົາຕໍ່ຕ້ານທຸກຂໍ້ຕົກລົງທາງດ້ານການຄ້າທີ່ລວມເອົາການສຶກສາເປັນສິນຄ້າ ແລະ ອຳນວຍຄວາມສະດວກການເປີດເສລີການ ບໍລິການການສຶກສາ ແລະ ສູນເສຍ ສິດທິ, ໃນກໍລະນີຂອງຂໍ້ຕົກລົງການຄ້າໃນການບໍລິການ (TISA). ພວກເຮົາຍັງຮຽກຮ້ອງໃຫ້ລັດຖະບານໃນການວາງລະບຽບການທີ່ຮັດກຸມຂອງການສະໜອງການສຶກສາຂອງພາກເອກະຊົນເພື່ອປ້ອງກັນການລະເມີດ, ການແບ່ງແຍກ ແລະ ຄວາມບໍ່ເທົ່າທຽມທີ່ເພີ່ມຂຶ້ນເລື້ອຍໆ.





15. ພວກເຮົາສະໜັບສະໜູນຄວາມ ຕ້ອງການເພື່ອປັບປຸງການຕິດຕາມ ແລະ ປະເມີນຜົນຄວາມຄືບໜ້າໃນທຸກລະດັບ ແລະ ການຊຸກຍູ້ສຳລັບການປະຕິວັດ ທາງດ້ານຂໍ້ມູນ ໂດຍສະເພາະໃນການຮັບປະກັນວ່າຂໍ້ມູນທີ່ ແຍກອອກນັ້ນຍັງມີຢູ່ຢ່າງໂປ່ງໃສເພື່ອເປັນບ່ອນອີງໃຫ້ແກ່ ນະໂຍບາຍການສຶກສາ ແລະ ການປະຕິບັດຕົວຈິງ. ສິ່ງທ້າທາຍທີ່ໃຫຍ່ທີ່ສຸດແມ່ນການສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບຂອງຊາດ ແລະ ການສ້າງຂີດຄວາມສາມາດໃນການເກັບກຳຂໍ້ມູນ ທາງດ້ານຄຸນນະພາບ ແລະ ປະລິມານ ເຊັ່ນກັນກັບການວິເຄາະທີ່ມີປະສິດທິຜົນ ແລະ ມີຄວາມໝາຍ. ຄວາມຕ້ອງການດັ່ງກ່າວນີ້ຕ້ອງໃຫ້ບຸລິມະສິດໃສ່ຄວາມປາດຖະໜາສຳລັບຂໍ້ມູນທີ່ ສາມາດປຽບໄດ້ໃນສາກົນ. ຕ້ອງມີຄວາມພະຍາຍາມຢ່າງຫຼວງຫຼາຍເພື່ອຕິດຕາມຂອບເຂດຊ່ອງຫວ່າງຄວາມເທົ່າທຽມກັນ ໃນການສຶກສາຖືກຫຼຸດຜ່ອນລົງ.

16. ພວກເຮົາຮັບຮູ້ເຖິງບົດບາດທີ່ສຳຄັນທີ່ອົງການ UNESCO ປະຕິບັດຕາມໜ້າທີ່ຮັບຜິດຊອບອົງການສະຫະປະຊາຊາດສຳລັບການສຶກສາ ແລະ ພວກເຮົາຢາກໃຫ້ການສືບຕໍ່ຂະບວນການຮຽນຮ່ວມ ແລະ ປະຊາທິປະໄຕ ແລະ ຮ່າງການຈັດຕັ້ງໂດຍມີສະມາຊິກຂອງລັດ, ອົງການສະຫະປະຊາຊາດ ແລະ ອົງການຈັດຕັ້ງທາງສັງຄົມມີສ່ວນຮ່ວມນຳ. ການຮ່ວມມືດັ່ງກ່າວແມ່ນມີຄວາມສຳຄັນທີ່ສຸດເພື່ອຄວາມສຳເລັດ. ໃນນາມອົງການຈັດຕັ້ງທາງສັງຄົມ ພວກເຮົາເຫັນຄວາມສຳຄັນການຄົ້ນຄວ້າແບບລວມໝູ່ຂອງອົງການຈັດຕັ້ງທີ່ບໍ່ສັງກັດລັດກ່ຽວກັບການສຶກສາເພື່ອທຸກຄົນ ແລະ ອົງປະກອບຂອງ ຄະນະນຳການສຶກສາເພື່ອທຸກຄົນເຊິ່ງມີຕົວແທນຈາກອົງການຈັດຕັ້ງທາງສັງຄົມເຂົ້າຮ່ວມນຳ.

Education for Everyone. Worldwide.
Lifelong.



17. ພວກເຮົາ, ຕົວແທນຂອງອົງການຈັດຕັ້ງ ທີ່ບໍ່ຂຶ້ນກັບລັດຖະບານລະດັບຊາດ, ລະດັບພາກພື້ນ ແລະ ລະດັບສາກົນ ແລະ ອົງການຈັດຕັ້ງທາງສັງຄົມຈາກຫຼາຍພາກສ່ວນຂອງໂລກທີ່ແຕກຕ່າງກັນ ມີພັນທະໃນການເຮັດວຽກ ແລະ ຮ່ວມມືກັນກັບ ລັດຖະບານ ແລະ ກຸ່ມຕ່າງໆ ຢ່າງກວ້າງຂວາງ, ບຸກຄົນ ແລະ ສະຖາບັນຕ່າງໆ ເພື່ອກ້າວໄປເຖິງເປົ້າໝາຍຂອງພວກເຮົາເພື່ອ “ຮັບປະກັນການສຶກສາຮຽນຮ່ວມທີ່ມີຄຸນນະພາບ ແລະ ທົ່ວເຖິງ ແລະ ສົ່ງເສີມໂອກາດການຮຽນຮູ້ຕະຫຼອດຊີວິດເພື່ອທຸກຄົນ, ການສຶກສາທີ່ມີຄຸນນະພາບເພື່ອທຸກຄົນ”. ເວົ້າສະເພາະ, ພວກເຮົາມີພັນທະດັ່ງນີ້:

- ສືບຕໍ່ພົວພັນ ແລະ ປຶກສາຫາລື ກັບ ອົງການ UNESCO ໃນທຸກລະດັບ ແລະ ພາກສ່ວນທີ່ກ່ຽວຂ້ອງທີ່ສໍາຄັນອື່ນໆ ໃນການເຊື່ອມຕໍ່ວຽກງານການສຶກສາເຂົ້າໃນວຽກງານຂອງເປົ້າໝາຍການພັດທະນາແບບຍືນຍົງຂອງສະຫະປະຊາຊາດ ໂດຍສະເພາະຢູ່ກອງປະຊຸມການສຶກສາໂລກ;

- ພົວພັນທຸກລັດຖະບານໃນລະດັບທ້ອງຖິ່ນ, ພາກພື້ນ ແລະ ສູນກາງເພື່ອປະຕິບັດພັນທະຂອງພວກເຂົາເຂົ້າໃນການຈັດຕັ້ງປະຕິບັດວຽກງານການສຶກສາ 2030 ແລະ ຂອບວຽກງານການເຄື່ອນໄຫວ;

- ເພີ່ມການໂຄສະນາຂອງພວກເຮົາສໍາລັບການສຶກສານັບທັງພາຍໃນ ແລະ ພາຍນອກຂອງຊຸມຊົນການສຶກສາ ແລະ ຖືເອົາຄວາມຮັບຜິດຊອບຂອງລັດ ແລະ ຜູ້ໃຫ້ທຶນເພື່ອບັນລຸພັນທະຂອງພວກເຂົາ;



- ຊຸກຍູ້ການມີສ່ວນຮ່ວມຂອງຄອບຄົວ, ເດັກ, ຊາວໜຸ່ມ, ນັກສຶກສາ, ຄູອາຈານ ແລະ ຊຸມຊົນ ໂດຍສະເພາະແມ່ນກຸ່ມດ້ອຍໂອກາດທີ່ສຸດ ເພື່ອວ່າ ສຽງຂອງພວກເຂົາໄດ້ ປະກອບເຂົ້າໃນວຽກງານ, ການສ້າງນະໂຍບາຍ ແລະ ການຈັດຕັ້ງປະຕິບັດ;

- ເຜີຍແຜ່ເອກະສານຜົນໄດ້ຮັບດັ່ງກ່າວນີ້ທົ່ວສະມາຊິກ CCNGO/ການສຶກສາເພື່ອທຸກຄົນ ແລະ ອົງການຈັດຕັ້ງທາງສັງຄົມທີ່ກວ້າງຂວາງໃນລະດັບຊາດ, ລະດັບພາກພື້ນ ແລະ ສາກົນ;

- ເຜີຍແຜ່ຖະແຫຼງການຈາກກອງປະຊຸມສຶກສາໂລກ 2015 ແລະ ຂອບວຽກງານການເຄື່ອນໄຫວ “ການສຶກສາ 2030”.

18. ໂດຍມີການເຮັດວຽກຮ່ວມກັນ, ພວກເຮົາຕ້ອງສືບຕໍ່ສ້າງກໍາລະນີທີ່ໜ້າສົນໃຈວ່າການສຶກສາແມ່ນຢູ່ໃນໝາກຫົວໃຈຂອງວຽກງານພາຍຫຼັງປີ 2015, ອໍານວຍຄວາມສະດວກ ຜົນສໍາເລັດຂອງບັນດາເປົ້າໝາຍການພັດທະນາ ແບບຍືນຍົງ. ຄວາມໜາແໜ້ນໃໝ່ໃນລະດັບໂລກກ່ຽວກັບການພັດທະນາຕ້ອງມີຄົນລຸ້ນໃໝ່ທຸກໄວອາຍຸໃນລະດັບໂລກທີ່ຫ້າວຫັນຢູ່ໃນທຸກປະເທດ, ການພັດທະນາ ແລະ ການແລກປ່ຽນ ທັດສະນະຄະຕິ, ຄວາມຮູ້ ແລະ ການປະພຶດ ທີ່ສໍາຄັນ ສໍາລັບໂລກທີ່ຍືນຍົງ. ເພື່ອບັນລຸ ສັກສີ ແລະ ຄວາມຍຸຕິທໍາທາງດ້ານສັງຄົມ ແລະ ສິ່ງແວດລ້ອມ, ພວກເຮົາຕ້ອງມີການສຶກສາຮຽນຮ່ວມ, ການສຶກສາທີ່ທົ່ວເຖິງ, ການສຶກສາທີ່ມີຄຸນນະພາບ ແລະ ການຮຽນຮູ້ຕະຫຼອດຊີວິດເພື່ອທຸກຄົນ.



DVV International

Newsletter № 2/2015

Education for Everyone. Worldwide.
Lifelong.

# ບົດລາຍງານຜົນສຳເລັດຂອງການ ເຂົ້າຮ່ວມຝຶກອົບຮົມໃນຫົວຂໍ້ "ການຮຽນຮູ້-ການວາງແຜນ ເພື່ອສົ່ງເສີມທັກສະສຳລັບຊາວໜຸ່ມ ແລະ ເສີມສ້າງການຮ່ວມມືກັບອົງການພາຄີ"

ໃນລະຫວ່າງວັນທີ 19-25 ເມສາ 2015, ທີ່ນິວເດລີ ປະເທດອິນເດຍ

I. ຄວາມເປັນມາ:

ຫ້ອງການຮ່ວມມືນາໆຊາດເພື່ອການສຶກສາຜູ້ໃຫຍ່ເຢຍລະມັນ ປະຈຳ ສປປ ລາວ ຫຼື DVV International ແມ່ນສະມາຄົມສົ່ງເສີມການສຶກສາ, ຄວາມຮູ້, ທັກສະໃຫ້ແກ່ຊາວໜຸ່ມ, ຜູ້ໃຫຍ່ ໂດຍສະເພາະຜູ້ທີ່ດ້ອຍໂອກາດ ຢູ່ຫ່າງໄກສອກຫຼີກ ເພື່ອໃຫ້ເຂົາເຈົ້າໄດ້ມີຄວາມຮູ້, ມີວຽກເຮັດງານທຳ ເພື່ອນຳມາພັດທະນາຊີວິດການເປັນຢູ່ດີຂຶ້ນ. ສະມາຄົມດັ່ງກ່າວ ໄດ້ຮັບການສະໜັບໜູນທາງ ດ້ານງົບປະມານຈາກສະຖາບັນຮ່ວມມືສາກົນເຢຍລະມັນ ເຊິ່ງມີຫ້ອງການປະຈຳຢູ່ແຕ່ລະຂົງເຂດທົ່ວໂລກ. ກິດຈະກຳຕົ້ນຕໍແມ່ນຈັດຝຶກອົບຮົມ ເພື່ອສ້າງຄວາມເຂັ້ມແຂງ ທາງດ້ານຄວາມຮູ້ ຄວາມສາມາດ, ທັກສະໃຫ້ແກ ພະນັກງານ ວິຊາການ



ທັງອົງການຈັດຕັ້ງທີ່ຂຶ້ນກັບລັດຖະບານ ແລະ ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ປະກອບດ້ວຍຫົວຂໍ້ທີ່ແຕກຕ່າງກັນໃນແຕ່ລະປີ. ສຳລັບປີ 2015 ແມ່ນໄດ້ຈັດຂຶ້ນທີ່ສູນ ເປຣັຍ ນະຄອນຫຼວງນິວເດຍລີ ປະເທດອິນເດຍ ພາຍໃຕ້ຫົວຂໍ້ "ການຮຽນຮູ້-ການວາງແຜນເພື່ອສົ່ງເສີມທັກສະສຳລັບຊາວໜຸ່ມ ແລະ ເສີມສ້າງການຮ່ວມມືກັບອົງການພາຄີ" ມີຜູ້ເຂົ້າຮ່ວມທັງໝົດ 25 ຄົນ, ມາຈາກປະເທດ ອຸດສະເບັກກິດສະຕານ, ເຄີກີກິດສະຕານ, ຕາກີກິດສະຕານ, ອັບການິດສະຕານ, ຈໍແດນ, ເຢຍລະມັນ, ເນປານ, ສສ ຫວຽດນາມ, ສປປ ລາວ, ຟິລິບປິນ ແລະ ອິນເດຍ.

II. ຜົນຂອງການເຂົ້າຮ່ວມຝຶກອົບຮົມ

- ຄະນະຮັບຜິດຊອບຈັດຝຶກອົບຮົມໄດ້ສະເໜີຄວາມເປັນມາຂອງໂຄງການ ແລະ ຄວາມໝາຍຄວາມສຳຄັນຂອງການຈັດຝຶກອົບຮົມ ດັ່ງກ່າວໃຫ້ຜູ້ເຂົ້າຮ່ວມໄດ້ຮັບຊາບ ແລະ ເຂົ້າໃຈ.
- ໄດ້ຮັບຟັງການບັນລະຍາຍຈາກວິທະຍາກອນ ເຊິ່ງໄດ້ຍົກຫົວຂໍ້ຂອງການຝຶກອົບຮົມ-ອະທິບາຍບົດຮຽນ ແລະ ໃຫ້ຜູ້ເຂົ້າຮ່ວມໄດ້ສົນ ທະນາແລກປ່ຽນບົດຮຽນເຊິ່ງກັນແລະກັນເປັນຕົ້ນ: ທັກສະຊີວິດສຳລັບຊາວໜຸ່ມ, ການວາງແຜນວຽກ, ສະເໜີບົດຮຽນຕົວຢ່າງຂອງ ສູນວິໄຈ ແບບມີສ່ວນຮ່ວມໃນອາຊີ(PRIA), ການວາງແຜນຂຽນໂຄງການ, ການທັດສະນະສຶກສາເບິ່ງໂຮງຮຽນປະຖົມສຶກສາ ແລະ ພັດທະນາອົງການ ແລະ ຫົວຂໍ້ສຳຄັນອື່ນໆ.
- ຜູ້ເຂົ້າຮ່ວມທີ່ມາຈາກຂົງເຂດຕ່າງໆທັງໃນທະວີບອາຊີ ແລະ ປະເທດເຢຍລະມັນ ໄດ້ເຂົ້າໃຈເຖິງບັນຫາ,ສາເຫດທີ່ເກີດກັບໄວໜຸ່ມ ໂດຍສະເພາະບັນຫາທີ່ເກີດຂຶ້ນກັບເດັກນ້ອຍ ແລະ ແມ່ຍິງໃນແຕ່ລະປະເທດເຊັ່ນບັນຫາຢາເສບຕິດ, ເພດສຳພັນ, ການກໍ່ອາດສະຍາກຳ, ການຄ້າມະນຸດ, ການຫວ່າງງານ, ການບໍ່ໄດ້ຮັບການສຶກສາ, ຄວາມທຸກຍາກ ແລະ ບັນຫາອື່ນໆອີກ, ພ້ອມນີ້ກໍໄດ້ແລກປ່ຽນຄວາມຄິດກ່ຽວກັບວິທີທາງການແກ້ໄຂບັນຫາດັ່ງກ່າວ.
- ໄດ້ໄປທັດສະນະສຶກສາເບິ່ງວິທີການດຳລົງຊີວິດຂອງຊຸມຊົນ, ສະຖານທີ່ທ່ອງທ່ຽວທາງດ້ານວັດທະນະທຳ ແລະ ການຈັດສັນຕົວເມືອງໃນເມືອງນິວເດລີ ປະເທດອິນເດຍ.
- ໄດ້ສຶກສາບົດຮຽນ ແລະ ແລກປ່ຽນຄວາມຮູ້ ກ່ຽວກັບການພັດທະນາອົງກອນ, ການຈັດຕັ້ງທີ່ຂຶ້ນກັບລັດຖະບານ ແລະ ບໍ່ຂຶ້ນກັບລັດຖະບານ ເພື່ອໃຫ້ມີຄວາມຍືນຍົງ ແລະ ດີຂຶ້ນເລື້ອຍໆ
- ພ້ອມນີ້ກໍໄດ້ຮ່ວມການສ້າງໂຄງການທີ່ເປັນປະໂຫຍດສຳລັບໄວໜຸ່ມ ເພື່ອນຳສະເໜີອົງການທີ່ກ່ຽວຂ້ອງ ສະໜັບສະໜູນໃນການປະຕິບັດຈິດຈະກຳໃນຕໍ່ໄປ.

ຜ່ານການເຂົ້າຮ່ວມຝຶກອົບຮົມໃນຫົວຂໍ້ "ການຮຽນຮູ້-ການວາງແຜນເພື່ອສົ່ງເສີມທັກສະສຳລັບ ຊາວໜຸ່ມ ແລະ ເສີມສ້າງການຮ່ວມມືກັບອົງການພາຄີ" ໃນລະຫວ່າງວັນທີ 19-25 ເມສາ 2015, ທີ່ນິວເດລີ ປະເທດອິນເດຍ ສາມາດຕີລາຄາດ້ານດີ, ດ້ານອ່ອນ ແລະ ບົດຮຽນທີ່ຖອດຖອນໄດ້ດັ່ງນີ້ :

ກ. ດ້ານດີ:

- ໄດ້ຮັບການຊີ້ນຳໆພາ ແລະ ອຳນວຍຄວາມສະດວກຈາກຄະນະເລຂາທິການ ສູນກາງ ຊປປລ, ຄະນະພົວພັນຕ່າງປະເທດສູນກາງພັກ, ກະຊວງການຕ່າງປະເທດໃນການອະນຸມັດໃຫ້ເຂົ້າຮ່ວມຝຶກອົບຮົມດັ່ງກ່າວ.
- ໄດ້ຮັບການສະໜັບສະໜູນທາງດ້ານງົບປະມານຈາກ DVV International ແລະ ສະຖານທີ່, ວິທະຍາກອນ ຈາກສູນວິໄຈແບບ ມີສ່ວນຮ່ວມໃນອາຊີ(PRIA) ປະເທດອິນເດຍ.
- ໄດ້ຮັບການຮ່ວມມື, ສ້າງຄວາມສາມັກຄີຮັກແພງ ແລະ

Newsletter № 2/2015

Education for Everyone. Worldwide.
Lifelong.



ແລກປ່ຽນຄວາມຮູ້, ປະສົບການກັບຜູ້ເຂົ້າຮ່ວມ ຈາກຫຼາຍໆປະເທດ ໃນແຕ່ລະຂົງເຂດອາຊີ ແລະ ເຢຍລະມັນ.

ຂ. ດ້ານອ່ອນ:

- ການກະກຽມເພື່ອເຂົ້າຮ່ວມໂຄງການໃຊ້ເວລາສັ້ນ ແລະ ຖືກໄລຍະເວລາສະເຫຼີມສະຫຼອງ ບຸນປີໃໝ່ລາວ ເຊິ່ງເຮັດໃຫ້ບາງເນື້ອໃນ ທີ່ນຳໄປແລກປ່ຽນ ຍັງບໍ່ຄົບຖ້ວນ ແລະ ບໍ່ຫຼາກຫຼາຍຮູບແບບ.
- ບົດຮຽນສ່ວນໃຫຍ່ທີ່ນຳມາແລກປ່ຽນກັນ ສ່ວນຫຼາຍເປັນທິດສະດີ ຄວນມີການລົງທັດສະນະສຶກສາຫຼາຍຂຶ້ນຕື່ມ.

ຄ. ບົດຮຽນທີ່ຖອດຖອນໄດ້ :

- ຜູ້ແທນທີ່ເຂົ້າຮ່ວມຝຶກອົບຮົມ ສາມາດເກັບກຳບົດຮຽນ, ປະສົບການ ແລະ ແລກປ່ຽນຄວາມຄິດເຫັນກັນຢ່າງກົງໄປກົງມາ.
- ໄດ້ຮຽນຮູ້ວັດທະນະທຳທ້ອງຖິ່ນ, ວິທີການດຳລົງຊີວິດຂອງຊາວອິນເດຍ ແລະ ໄດ້ປະສົບການຈາກການເດີນທາງ, ການກິນຢູ່ພັກເຊົາໃນຕົວເມືອງໃຫຍ່ທີ່ມີພົນລະເມືອງຫຼາຍ ໄລຍະການຝຶກອົບຮົມ 5 ວັນ.

ຂໍ້ສະເໜີ :

1. ສະໃຫ້ຂັ້ນເທິງສືບຕໍ່ພິຈາລະນາ ອະນຸມັດໃຫ້ພະນັກງານຂອງອົງການຈັດຕັ້ງທີ່ກ່ຽວຂ້ອງໄດ້ເຂົ້າຮ່ວມຝຶກອົບຮົມຕື່ມອີກ.
2. ສະເໜີໃຫ DVV International ສືບຕໍ່ ຈັດຝຶກອົບຮົມດັ່ງກ່າວ ໃນຫົວຂໍ້ທີ່ເໝາະສົມສຳລັບການພັດທະນາຊາວໜຸ່ມ, ເດັກນ້ອຍ ແລະ ແມ່ຍິງ ແລະ ເລືອກຈັດຢູ່ປະເທດອື່ນໆຕື່ມອີກ.

ດັ່ງນັ້ນ ຈຶ່ງຂໍຖືເປັນກຽດລາຍງານມາຍັງທ່ານເພື່ອຊາບ.

*ພູວົງ ມະນີວົງ*
*ຫົວໜ້າພະແນກວິທະຍຸ - ໂທລະພາບ*
*ກົມສື່ມວນຊົນ*
*ສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ*



ປະທານຂອງ
ສະມາຄົມ ເປຣຍ
ແລະ ຜູ້ເຂົ້າຮວມ ຈາກ
ສປປ ລາວ

ຈັດພິມໂດຍ: ດີວີວີ ອິນເຕີເນເຊິນແນວ ພາຍໃຕ້ຄວາມຮ່ວມມື
ກັບຄູ່ຮ່ວມພັດທະນາ ໃນ ສປປ ລາວ ແລະ ກຳປູເຈຍ, ອາຊີໃຕ້
ແລະ ອາຊີຕາເວັນອອກສ່ຽງໃຕ້

ຄະນະບັນນາທິການ: ດຣ. ກ້າ ສເຫຼີມສຸກ, ຂັນທອງ ອິນທະຈັກ,
ພິລານີ ພິດສະໄໝ, ແອນ ໂທມັສ
ທີມງານບັນນາທິການ: ບຸນມາກ ຕີທາພັນນິນ, ດາລຸນນີ
ສີສຸລາດ, ດອອກຄຳຊິມສີຫາປັນຍາ, ກາຕາ ໂຟດໍ
ບັນນາທິການ: ອູເວີ ກາກເຕີນສະແລເກີ

ດີວີວີ ອິນເຕີເນເຊິນແນວ
ປະຈຳພາກພື້ນອາຊີໃຕ້ ແລະ ອາຊີຕາເວັນອອກສ່ຽງໃຕ້
351/19 ຖະໜົນວັດນາກໃຫຍ່
ບ້ານທາພະລານໄຊ, ເມືອງສີສັດຕະນາກ
ຕູ້ ປ.ນ 1215, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ.: +856 21 315832-3
ແຟັກ: +856 21 312511
info@dvv-international.la
www.dvv-international.la



**Education for Everyone. Worldwide. Lifelong.**